# 11. ປ່າສະຫງວນແຫ່ງຊາດ ຫີນໜາມໜໍ່

## ຂໍ້ມູນທົ່ວໄປ

### ຊື່: ຫີນໜາມໜໍ່

**ເນື້ອທີ່**

82,000 ຮຕ (ໃນດຳລັດ 164/ນຍ)
88,500 ຮຕ (ໃນແຜນຄຸ້ມຄອງຮ່ວມ ປີ 2016)

ວັນ,ເດືອນ,ປີ ທີ່ໄດ້ຖືກກຳນົດເປັນປ່າສະຫງວນແຫ່ງຊາດ
29 ຕຸລາ 1993 ພາຍໃຕ້ ດຳລັດເລກທີ 164/ນຍ

**ຈຸດທີ່ຕັ້ງ**

ເສັ້ນຂະໜານ 17$^{o}$ 13' – 17$^{o}$ 40' ເໜືອ; ເສັ້ນແວງ: 105$^{o}$ 43' – 106$^{o}$ 09' ຕາເວັນອອກ

**ແຂວງ**

ຄຳມ່ວນ

**ເມືອງ**

| | |
|---|---|
| ບົວລະພາ | ກວມເອົາເນື້ອທີ່ 88,500 ຮຕ (100 %) |

**ຂອບເຂດຊາຍແດນ**

ເຂດແດນດ້ານທິດຕາເວັນອອກສ່ຽງເໜືອ ຂອງປ່າສະຫງວນ ຫີນໜາມໜໍ່ ເປັນຊາຍລະຫວ່າງປະເທດທີ່ຕິດກັບ ສສ ຫວຽດນາມ ແລະ ຕິດຈອດກັບ ອຸທິຍານແຫ່ງຊາດ ຟອງຍາແກບັງ ຢູ່ ສສ ຫວຽດນາມ (Phong Nha-Ke Bang National Park). ລະບົບດັ່ງກ່າວ ເປັນ ໜຶ່ງໃນລະບົບນິເວດຫີນປູນທີ່ຕໍ່ເນື່ອງຍາວທີ່ສຸດ ຢູ່ໃນ ອາຊີຕາເວັນອອກສ່ຽງໃຕ້. ຈຸດບ່ອນສູງສຸດທາງເໜືອຂອງ ເຂດຫີນໜາມໜໍ່ ມີເຂດແດນຕິດກັບ ປ່າສະຫງວນແຫ່ງຊາດ ນາກາຍ ນໍ້າເທີນ.

**ການເຂົ້າເຖິງ**

ການເດີນທາງ ໄປຫາ ຫ້ອງການຄຸ້ມຄອງປ່າສະຫງວນແຫ່ງຊາດ ຫີນໜາມໜໍ່ທີ່ຕັ້ງຢູ່ເມືອງບົວລະພາ ຈາກເມືອງ ທ່າແຂກ ແມ່ນ ໃຫ້ໃຊ້ທາງຫລວງໝາຍເລກ 12, ມຸ້ງໜ້າໄປທາງທິດຕາເວັນອອກສ່ຽງເໜືອ ຫາຊາຍແດນ ສສ ຫວຽດນາມ. ປະມານ 17 ກມ ຈາກ ຊາຍແດນ ສສ ຫວຽດນາມ, ໃຫ້ໃຊ້ເສັ້ນທາງດ້ານທິດໃຕ້ ມຸ້ງໜ້າໄປຫາ ເມືອງບົວລະພາ. ການເດີນທາງ ແຕ່ເມືອງ ທ່າແຂກ ຫາເມືອງ ບົວລະພາ ຈະໃຊ້ເວລາປະມານສີ່ຊົ່ວໂມງ. ນອກຈາກນີ້ ຍັງສາມາດເດີນທາງໄປຫີນໜາມໜໍ່ໄດ້ ຜ່ານທາງຫລວງໝາຍເລກ 12 ຈາກ ສສ ຫວຽດນາມ, ເຖິງແມ່ນວ່າ ຢູ່ບ່ອນນີ້ ຈະບໍ່ແມ່ນດ່ານກວດຄົນເຂົ້າ-ອອກເມືອງທີ່ເປັນທາງການ. ມີຫລາຍເສັ້ນທາງ ທີ່ໄດ້ຮັບການປັບປຸງ ລວມທັງ ເສັ້ນທາງໄປຫາ ລັງຄາງ(Langkhang).

ໃນລະດູຝົນ ການເດີນທາງເຂົ້າ-ອອກ ປ່າສະຫງວນແຫ່ງຊາດ ຫີນໜາມໜໍ່ ຈະພົບຄວາມຫຍຸ້ງຍາກເປັນພິເສດ. ໂດຍສະເພາະແມ່ນການເດີນທາງເຂົ້າໄປກຸ່ມບ້ານໜອງມ້າ, ສໍາລັບການເຂົ້າ-ອອກກຸ່ມບ້ານອື່ນໆ ແມ່ນມີຄວາມສະດວກສະບາຍຫລາຍກວ່າ. ການເດີນທາງດ້ວຍເຮືອກໍເປັນທາງເລືອກໜຶ່ງ ເພື່ອໄປເຂດສອກຫລີກຕ່າງໆໃກອື່ນໆໃນຊ່ວງລະດູຝົນ.

**ແຜນທີ່**

ມາດຕາສ່ວນ 1: 50,000

| | | | |
|---|---|---|---|
| 6144-3 | 6144-2 | | |
| 6143-4 | 6143-1 | 6243-4 | |
| | 6143-2 | 6243-3 | 6243-2 |

**ມາດຕາສ່ວນ** 1: 100,000

| | |
|---|---|
| E48-92 | E48-93 |
| E48-104 | E48-105 |

## ປະຫວັດຄວາມເປັນມາໂດຍຫຍໍ້

| | |
|---|---|
| 1960-1970 | ຖືກຖິ້ມລະເບີດຢ່າງໜັກໜ່ວງ ເນື່ອງຈາກວ່າ ເສັ້ນທາງເລກ 12 ຢູ່ດ້ານເໜືອຂອງປ່າສະຫງວນແຫ່ງຊາດນັ້ນ ເປັນແລວທາງຂອງເສັ້ນທາງໂຮ່ຈິມິນ ໃນໄລຍະສົງຄາມອິນດູຈີນ. |
| 1993 | ຫີນໜາມໜໍ່ໄດ້ຖືກປະກາດ ຕາມດໍາລັດເລກທີ 164 ຂອງ ນາຍົກລັດຖະມົນຕີ ໃນປີ 1993 ໃຫ້ເປັນເຂດປ່າສະຫງວນແຫ່ງຊາດ, ເຖິງວ່າໃນຄວາມເປັນຈິງຢູ່ເມືອງບົວລະພາ ໄດ້ມີການປ່ຽນແປງພຽງເລັກນ້ອຍ. |
| 1995 | ອົງການ WWF ໄດ້ໃຫ້ທຶນ ສໍາຫລວດເສດຖະກິດ-ສັງຄົມຂອງບ້ານ |
| 1996 | ໄດ້ມີການສໍາຫລວດສັດປ່າຮ່ວມກັນ ລະຫວ່າງ ອົງການອະນຸລັກສັດປ່າ(Wildlife Conservation Society) ແລະ ກົມປ່າໄມ້ |
| 1996 | ບັນດາທີ່ປຶກສາ ຫວຽດນາມ ໄດ້ຂຽນແຜນຫ້າປີ ໃຫ້ເມືອງບົວລະພາ |
| 1996-1998 | ເມືອງບົວລະພາໄດ້ຖືກໃຊ້ເປັນຖານປະຕິບັດງານ ຂອງໂຄງການ ເກັບກູ້ກະດູກ ຂອງທະຫານອາເມລິກາ ທີ່ສູນຫາຍໃນປາງສົງຄາມ (MIA program) |
| 1998 | ໄດ້ສໍາເລັດການສໍາຫລວດຂຶ້ນບັນຊີ ສັດປ່າ ຢູ່ເຂດຫີນໜາມໜໍ່ ແລະ ພື້ນທີ່ໃກ້ຄຽງ ຊຶ່ງແມ່ນ ອົງການ WWF ເປັນຜູ້ດໍາເນີນການ |
| 1999 | ອົງການ WWF ແລະ ກົມປ່າໄມ້ ໄດ້ເລີ່ມປະຕິບັດກິດຈະກາ ການຄຸ້ມຄອງ ເຂດປ່າສະຫງວນຫີນໜາມໜໍ່ |
| 1999 | ໄດ້ດໍາເນີນການວາງແຜນນໍາໃຊ້ທີ່ດິນຢູ່ບາງບ້ານ |
| 2000 | ໄດ້ເລີ່ມດໍາເນີນການວາງແຜນນໍາໃຊ້ທີ່ດິນ ແລະ ການສໍາຫລວດ ເສດຖະກິດ-ສັງຄົມ |
| 2003 | ອົງການ WWF ໄດ້ໃຫ້ທຶນຈໍານວນໜຶ່ງເພື່ອ ປະຕິບັດກິດຈະກໍາ ພັດທະນາຊີວິດການເປັນຢູ່ |
| 2003 | ໄດ້ມີການເຊັນບົດບັນທຶກຄວາມເຂົ້າໃຈລະຫວ່າງເຈົ້າແຂວງ-ແຂວງຄໍາມ່ວນກັບແຂວງ ກວາງບິງ, ສສ ຫວຽດນາມ ກ່ຽວກັບ ການຄຸ້ມຄອງປ່າສະຫງວນ ລະຫວ່າງຊາຍແດນ |
| 2006 | ໄດ້ມີການປັບປຸງການວາງແຜນນໍາໃຊ້ທີ່ດິນ, ກໍ່ສ້າງຫລັກໝາຍຊາຍແດນ ແລະ ເສີມສ້າງການຮ່ວມມືກັບ ສສ ຫວຽດນາມ (UNESCO ແລະ IUCN) |
| 2006 | ໄດ້ມີການຕົກລົງເຫັນດີດ້ານວິຊາການຮ່ວມກັນ ລະຫວ່າງ ປ່າສະຫງວນແຫ່ງຊາດ ຫີນໜາມໜໍ່ ກັບ ອຸທິຍານແຫ່ງຊາດ ຟອງຍາແກບັງ, ເຂດມໍລະດົກໂລກ ທາງທໍາມະຊາດ. |
| 2007 | ການສໍາຫລວດ ກ່ຽວກັບ ຂາແດງ(Red-shanked Douc Langur surveys) ( ການຄົ້ນຄວ້າ ລະດັບປະລິນຍາເອກ ກ່ຽວກັບ ການກະຈາຍ, ພຶດຕິກໍາ ແລະ ໄພຂົ່ມຂູ່) |
| 2009 | ການພັດທະນາ ການຄຸ້ມຄອງຮ່ວມ ກັບຊຸມຊົນທ້ອງຖິ່ນ ແລະ ພາກສ່ວນກ່ຽວຂ້ອງ (ລວມທັງ ພະນັກງານລັດ) |

| | |
|---|---|
| | ໂດຍອົງການອະນຸລັກທຳມະຊາດໂລກ(IUCN) ຜ່ານການຝຶກອົບຮົມຕ່າງໆ ແລະ ການລົງປະຕິບັດຕົວຈິງຢູ່ພາກສະໜາມ, ສະໜັບສະໜູນທຶນໂດຍ ກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ໂຄງການສິ່ງແວດລ້ອມແລະສັງຄົມລາວ(LENS/EPF) |
| 2009 | ໄດ້ດຳເນີນການຄົ້ນຄວ້າ ກ່ຽວກັບການມີສ່ວນຮ່ວມຂອງບ້ານ |
| 2009 | ສືບຕໍ່ການປຶກສາຫາລືກ່ຽວກັບ ການກຳນົດພື້ນທີ່ມໍລະດົກໂລກ ທາງທຳມະຊາດ |
| 2010 | ມີການອະນຸມັດແຜນຄຸ້ມຄອງຮ່ວມ ຂອງປ່າສະຫງວນ ຫີນໜາມໜໍ່ (2010-2015) |
| 2010 | ລັດຖະບານ ເຢຍລະມັນ ໃຫ້ການສະໜັບສະໜູນ ໂຄງການ ຫີນໜາມໜໍ່ໄລຍະທີໜຶ່ງ ເພື່ອໃຫ້ເລີ່ມຈັດຕັ້ງປະຕິບັດແຜນຄຸ້ມຄອງຮ່ວມ ແຕ່ປີ 2010-2015 (ຕຸລາ 2010 ຮອດ ພະຈິກ 2013) |
| 2011 | ມີການໂອນຄວາມຮັບຜິດຊອບ ໃນການຄຸ້ມຄອງປ່າສະຫງວນ ຈາກກະຊວງ ກະສິກຳ ແລະ ປ່າໄມ້ ໄປໃຫ້ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ |
| 2013 | ໄດ້ເລີ່ມປະຕິບັດໂຄງການ ຫີນໜາມໜໍ່ໄລຍະທີສອງ (ພະຈິກ 2013 ຮອດ ຕຸລາ 2018) ໂດຍແມ່ນ ລັດຖະບານເຢຍລະມັນເປັນຜູ້ໃຫ້ທຶນ ແລະ ອົງການຮ່ວມມືຂອງປະເທດເຢຍລະມັນ(GIZ) ເປັນຜູ້ຈັດຕັ້ງປະຕິບັດ. ມີງົບປະມານ ການເຄື່ອນໄຫວວຽກປົກກະຕິ ເພື່ອຈັດຕັ້ງປະຕິບັດ ແຜນຄຸ້ມຄອງຮ່ວມ |
| 2013 | ໄດ້ສ້າງຕັ້ງ 6 ໜ່ວຍງານວິຊາການຂຶ້ນ ແລະ ມີການພັດທະນາ ແຜນຍຸດທະສາດ ແຕ່ປີ 2014-2016 |
| 2014 | ໜ່ວຍກວດກາລາດຕະເວນຂັ້ນບ້ານ ໄດ້ເລີ່ມແຕ້ມແຜນທີ່ ແລວທາງທຽວຂອງສັດປ່າ, ການຕິດຕາມສັດປ່າ, ການກວດກາລາດຕະເວນ, ແລະ ການກຳນົດເຂດ |
| 2014 | ການປະເມີນ ກ່ຽວກັບການຄຸ້ມຄອງ ແລະ ການຈັດຕັ້ງ ຄະນະກຳມະການ ຄຸ້ມຄອງຮ່ວມ ຢູ່ຂັ້ນບ້ານ ແລະ ຂັ້ນກຸ່ມບ້ານ; ໄດ້ຮ່າງ ຂໍ້ຕົກລົງກ່ຽວກັບ ການຄຸ້ມຄອງຮ່ວມ (ກົດລະບຽບພາຍໃນ) |
| 2015 | ໄດ້ມີການສ້າງຕັ້ງ ຄະນະກຳມະການຄຸ້ມຄອງຮ່ວມ ຢູ່ຂັ້ນເມືອງ ແລະ ສ້າງຕັ້ງ 5 ຄະນະວິຊາການ ແລະ ໄດ້ມີການອະນຸມັດ ຂໍ້ຕົກລົງໃນການຄຸ້ມຄອງຮ່ວມ (ກົດລະບຽບພາຍໃນ) ໂດຍເຈົ້າເມືອງ-ເມືອງບົວລະພາ |
| 2015 | ໄດ້ສ້າງແຜນຄຸ້ມຄອງຮ່ວມໄລຍະຫ້າປີ ຂອງປ່າສະຫງວນແຫ່ງຊາດ ຫີນໜາມໜໍ່ (2016-2020) |

## ການຄຸ້ມຄອງ ໃນປະຈຸບັນ

**ການປະກອບພະນັກງານ ຂອງປ່າສະຫງວນແຫ່ງຊາດ**

ຮອດເດືອນມັງກອນ 2017, ມີພະນັກງານ ຈາກຫ້ອງການ ກະສິກຳ ແລະ ປ່າໄມ້ເມືອງ ສອງຄົນ, ແລະ ອາສາສະໝັກ 18 ຄົນ. ພະນັກງານເຫລົ່ານີ້ ໄດ້ຖືກຈັດແບ່ງອອກເປັນ ຫ້າໜ່ວຍງານວິຊາການ, ປະກອບດ້ວຍ (i) ໜ່ວຍງານບໍລິຫານ, (ii) ໜ່ວຍງານຕິດຕາມກວດກາຊີວະນາໆພັນ, (iii) ໜ່ວຍງານບັງຄັບໃຊ້ກົດໝາຍ ແລະ ການຄຸ້ມຄອງທີ່ດິນ, (iv) ໜ່ວຍງານໂຄສະນາເຜີຍແຜ່, ແລະ (v) ໜ່ວຍງານທ່ອງທ່ຽວ ທຳມະຊາດ.

**ລະບົບການປະສານສົມທົບ ແລະ ພາກສ່ວນທີ່ກ່ຽວຂ້ອງ**

ຫລາຍພາກສ່ວນກ່ຽວຂ້ອງ ຕ້ອງໄດ້ເຂົ້າມາມີສ່ວນຮ່ວມນຳ ເພື່ອຮັບປະກັນ ປະສິດທິພາບ ຂອງຄຸ້ມຄອງທີ່ມີການປະສານສົມທົບ. ພາກສ່ວນທີ່ເປັນເສົາຫລັກແລະເປັນເຈົ້າຂອງສິດລ້ອນແຕ່ແມ່ນປະຊາຊົນແລະອົງການທີ່ຮັບຜິດຊອບຄຸ້ມຄອງປ່າສະຫງວນ,ຊຶ່ງຕາມຫລັກການແລ້ວ ທັງສອງພາກສ່ວນນີ້ ແມ່ນຜູ້ປະຕິບັດບັນດາໜ້າວຽກ ທີ່ເຊື່ອມໂຍງກັນ. ການຄຸ້ມຄອງທີ່ມີການປະສານສົມທົບທີ່ປະສົບຜົນສຳເລັດນັ້ນ ຍັງຂຶ້ນຢູ່ກັບ ການມີສ່ວນຮ່ວມຂອງພາກສ່ວນກ່ຽວຂ້ອງສຳຮອງ. ໃນນີ້ ປະກອບດ້ວຍ ບັນດາຜູ້ຕາງໜ້າຈາກອົງການຈັດຕັ້ງຂອງລັດເຊັ່ນ: ຫ້ອງວ່າການປົກຄອງເມືອງ, ສະຫະພັນແມ່ຍິງ, ຫ້ອງການທ່ອງທ່ຽວ, ຫ້ອງການແຜນການແລະພັດທະນາຊົນນະບົດ,ພະນັກງານກະສິກຳ, ພະນັກງານກວດກາປ່າໄມ້, ລວມທັງ ເຈົ້າໜ້າທີ່ຕຳຫລວດ ແລະ ທະຫານ. ຄາດວ່າ ພາກສ່ວນກ່ຽວຂ້ອງ ສຳຮອງເຫລົ່ານີ້ຈະເຂົ້າຮ່ວມໃນການຊີ້ນຳການປະຕິບັດງານ ແລະ ຍຸດທະສາດ(ການປະສານງານ; ການບັງຄັບໃຊ້ກົດໝາຍ). ອັນນີ້ຈະຊ່ວຍຮັບມືກັບໄພຂົ່ມຂູ່ ເຊັ່ນ: ການລັກລອບຕັດໄມ້ ແລະ ການລ່າສັດທີ່ຜິດກົດໝາຍຂອງກຸ່ມຄົນບໍ່ດີທີ່ຫວັງແຕ່ຜົນປະໂຫຍດ ໃນໄລຍະສັ້ນ ຊຶ່ງເປັນສາເຫດ ເຮັດໃຫ້ມີການນຳໃຊ້ ຊັບພະຍາກອນແບບບໍ່ຍືນຍົງ. ນອກຈາກນັ້ນແລ້ວ, ພັນທະມິດຍຸດທະສາດ ທີ່ໃຫ້ການຊ່ວຍເຫລືອ ບັນດາຄູ່ຮ່ວມງານ ກໍຈຳເປັນຕ້ອງມີການສ້າງຂີດຄວາມສາມາດ, ການສະໜັບສະໜູນອົງການຈັດຕັ້ງ

ແລະ ການສະໜອງທຶນ. ເພື່ອຮັບປະກັນວ່າ ພາກສ່ວນກ່ຽວຂ້ອງທັງໝົດ ຈະສາມາດເຮັດວຽກຮ່ວມກັນ ເພື່ອເປົ້າໝາຍອັນດຽວກັນໄດ້ນັ້ນ ມັນຈຳເປັນຕ້ອງໄດ້ມີ ການກະກຽມອົງການຈັດຕັ້ງ ທີ່ມີປະສິດທິພາບຂຶ້ນມາ.

**ຄະນະກຳມະການຄຸ້ມຄອງຮ່ວມ ຂອງປ່າສະຫງວນແຫ່ງຊາດ ຫີນໜາມໜໍ່**

ຫີນໜາມໜໍ່ ແລະ ເຂດກັນຊົນທັງໝົດ ຂອງຫີນໜາມໜໍ່ ລ້ວນແຕ່ຕັ້ງຢູ່ພາຍໃນເມືອງບົວລະພາ. ຫລັງຈາກນັ້ນ, ຈຶ່ງໄດ້ມີການສ້າງຕັ້ງ ຄະນະກຳມະການທີ່ປະກອບດ້ວຍຫລາຍພາກສ່ວນກ່ຽວຂ້ອງຂຶ້ນຢູ່ຂັ້ນເມືອງ - ເປັນ ຄະນະກາມະການຄຸ້ມຄອງຮ່ວມ ປ່າສະຫງວນແຫ່ງຊາດ ຫີນໜາມໜໍ່ ຫລື ຄະນະກຳມະການຄຸ້ມຄອງຮ່ວມຂັ້ນເມືອງ(ຄກມ). ພາກສ່ວນຄຸ້ມຄອງ ທີ່ມີຂະໜາດໃຫຍ່ດັ່ງກ່າວນີ້ ປະກອບດ້ວຍ ທ່ານຮອງເຈົ້າເມືອງ(ເປັນປະທານ), ກອງເລຂາ ແລະ ຜູ້ຕາງໜ້າ ແມ່ນມາຈາກ ຄະນະກຳມະການຄຸ້ມຄອງຮ່ວມຂັ້ນກຸ່ມບ້ານ(ຄກກ) ແລະ ພາກສ່ວນກ່ຽວຂ້ອງສາຮອງ ແມ່ນມາຈາກ ອົງການຈັດຕັ້ງທີ່ກ່ຽວຂ້ອງຂອງເມືອງ. ຄະນະກາມະການຄຸ້ມຄອງຮ່ວມ ປ່າສະຫງວນແຫ່ງຊາດຫີນໜາມໜໍ່ ຫລື ຄະນະກຳມະການຄຸ້ມຄອງຮ່ວມຂັ້ນເມືອງ ຈະມີການປະຊຸມກັນທຸກໆໄຕມາດ ແລະ ເປັນກົງຈັກຫລັກແຫລ່ງ ໃນການຊີ້ນຳ ການຄຸ້ມຄອງ ປ່າສະຫງວນແຫ່ງຊາດຫີນໜາມໜໍ່.

**ບັນດາກຸ່ມເຮັດວຽກ ປ່າສະຫງວນ**

ພາຍໃຕ້ ຄກມ, ໄດ້ມີການຈັດຕັ້ງກຸ່ມເຮັດວຽກຂຶ້ນຫ້າກຸ່ມ ໃນຂົງເຂດຕ່າງໆຂອງການຄຸ້ມຄອງປ່າສະຫງວນ ໂດຍມີລະດັບຄວາມສາມາດ ແລະ ຄວາມຊຳນານງານແຕກຕ່າງກັນ. ຂົງເຂດວິຊາສະເພາະເຫລົ່ານີ້ ປະກອບດ້ວຍ:

(i) ການຕິດຕາມກວດກາຊີວະນາໆພັນ, ຄົ້ນຄວ້າ ແລະ ຖານຂໍ້ມູນ; (ii) ການບັງຄັບໃຊ້ກົດໝາຍ ແລະ ການຄຸ້ມຄອງພື້ນທີ່; (iii) ການໂຄສະນາເຜີຍແຜ່; (iv) ການທ່ອງທ່ຽວທາມະຊາດ ແລະ (v) ການພັດທະນາຊີວິດການເປັນຢູ່ (de Koning *et al.,* 2016).

**ຄະນະກຳມະການ ຄຸ້ມຄອງຮ່ວມຂັ້ນກຸ່ມບ້ານ(ຄກກ)**

ຄະນະກຳມະການຄຸ້ມຄອງຮ່ວມຂັ້ນກຸ່ມບ້ານ(ຄກກ)ໄດ້ຖືກສ້າງຕັ້ງຂຶ້ນຢູ່ຫ້າກຸ່ມບ້ານ ປະກອບດ້ວຍສະມາຊິກ 19 ທ່ານ. ຄກກ ດຳເນີນກອງປະຊຸມ ຢູ່ຂັ້ນກຸ່ມບ້ານ ແລະ ລາຍງານຕໍ່ຂັ້ນເມືອງ. ໂຄງປະກອບການຈັດຕັ້ງ, ສິດ ແລະ ໜ້າທີ່ ຂອງ ຄກກ ແມ່ນໄດ້ກຳນົດຂຶ້ນຢ່າງລະອຽດ ຢູ່ໃນ ຂໍ້ຕົກລົງວ່າດ້ວຍ ການຄຸ້ມຄອງຮ່ວມ.

**ຄະນະກຳມະການຄຸ້ມຄອງຮ່ວມຂັ້ນບ້ານ (ຄກບ)**

ທັງໝົດມີ 19 ຄກບ ໄດ້ຖືກສ້າງຂຶ້ນ ຊຶ່ງປະກອບດ້ວຍ ສະມາຊິກ 66 ທ່ານ (ແມ່ຍິງ ສີ່ທ່ານ). ຄກບ ຈັດກອງປະຊຸມ ຢູ່ຂັ້ນບ້ານ ແລະ ລາຍງານຕໍ່ຂັ້ນກຸ່ມບ້ານ. ໂຄງປະກອບການຈັດຕັ້ງ, ສິດ ແລະ ໜ້າທີ່ ຂອງ ຄກບ ແມ່ນໄດ້ກຳນົດຂຶ້ນຢ່າງລະອຽດ ຢູ່ໃນ ຂໍ້ຕົກລົງ ວ່າດ້ວຍ ການຄຸ້ມຄອງຮ່ວມ.

**ການສະໜັບສະໜູນດ້ານການເງິນ ແລະ ການຝຶກອົບຮົມ**

ການຊ່ວຍເຫລືອດ້ານວິຊາການ ແລະ ດ້ານການເງິນ ຈະແມ່ນອົງການຮ່ວມມືຂອງປະເທດເຢຍລະມັນ(GIZ) ສະໜອງໃຫ້ ຜ່ານທາງ 'ໂຄງການ ຄຸ້ມຄອງຊັບພະຍາກອນ ແບບຍືນຍົງ ແລະ ອະນຸລັກທຳມະຊາດແບບປະສົມປະສານ ຢູ່ເຂດ ຫີນໜາມໜໍ່' ຈົນຮອດເດືອນຕຸລາ 2018. ໄດ້ມີການສະໜອງການຝຶກອົບຮົມ ເພື່ອປັບປຸງການມີສ່ວນຮ່ວມ, ການຮັບຮູ້, ຄວາມເຊື່ອໝັ້ນຕົນເອງ ແລະ ການກະຕຸກຊຸກຍູ້ ປະຊາຊົນທ້ອງຖິ່ນ ເຂົ້າຮ່ວມໃນການຄຸ້ມຄອງ ປ່າສະຫງວນ. ພະນັກງານຢູ່ຂັ້ນເມືອງ ແລະ ຂັ້ນແຂວງ ກໍໄດ້ຮັບການຝຶກອົບຮົມ ເພື່ອສົ່ງເສີມ ແລະ ອຳນວຍຄວາມສະດວກ ໃຫ້ຂະບວນການມີສ່ວນຮ່ວມ. ນັບແຕ່ເດືອນພະຈິກ 2013 - ມີນາ 2015 ໄດ້ ສະໜອງການຝຶກອົບຮົມ ໃຫ້ປະຊາຊົນທ້ອງຖິ່ນ ລວມທັງໝົດ 4.501 ເທື່ອຄົນ. ພະນັກງານຈາກພາກລັດ 28 ຄົນ (ໃນນີ້ມີ ອາສາ ສະໝັກ 19 ຄົນ), ໄດ້ເຂົ້າຮ່ວມການຝຶກອົບຮົມ ຈຳນວນ 1.750 ເທື່ອຄົນ. ອາສາສະໝັກລວມທັງໝົດ 71 ຄົນ ໄດ້ຈັດຕັ້ງປະຕິບັດ ການຕິດຕາມກວດກາຊີວະນາໆພັນ ແລະ ການກວດກາລາດຕະເວນ ຈຳນວນ 976 ເທື່ອຄົນ. ໄດ້ມີ ປະຊາຊົນຈຳນວນ 102 ຄົນ (ແມ່ຍິງ 32 ຄົນ) ເຂົ້າຮ່ວມ ການກຳນົດເຂດແບບມີສ່ວນຮ່ວມ ຈຳນວນ 477 ເທື່ອຄົນ.

### ບຸລິມະສິດ ການຄຸ້ມຄອງໃນປະຈຸບັນ

ບັນດາບຸລິມະສິດການຄຸ້ມຄອງ ແມ່ນໄດ້ສະເໜີໄວ້ ຢູ່ໃນ ແຜນຄຸ້ມຄອງຮ່ວມ ໄລຍະຫ້າປີ ຂອງປ່າສະຫງວນແຫ່ງຊາດ ຫີນໜາມໜໍ່ (2016-2020).

### ໂຄງການອື່ນໆ ທີ່ເຄື່ອນໄຫວ ຢູ່ໃນພື້ນທີ່

ລັດຖະບານ ເຢຍລະມັນ ຈະສະໜັບສະໜູນ ບ້ານຕ່າງໆທີ່ໄດ້ຄັດເລືອກເອົາຈາກເຂດທີ່ດ້ອຍໂອກາດຂອງ ປ່າສະຫງວນຫີນໜາມໜໍ່ ພາຍໃຕ້ ໂຄງການຮ່ວມມືການສະໜອງທຶນ ອະນຸລັກຊີວະນາໆພັນ ແລະ ປ່າໄມ້ ແບບປະສົມປະສານ (ICBF). ໂດຍມີຮູບແບບວິທີການເພື່ອປັບປຸງ ສະພາບການດຳລົງຊີວິດ ຢູ່ບັນດາບ້ານ ແລະ ການປະສານສົມທົບກັບ ອະນຸລັກຊີວະນາໆພັນ.

## ສະພາບແວດລ້ອມດ້ານຊີວະ -ກາຍະພາບ

### ລັກສະນະທາງພູມສັນຖານ

ປ່າສະຫງວນແຫ່ງຊາດຫີນໜາມໜໍ່ ເປັນພື້ນທີ່ພູມີຫັດຫີນປູນຂະໜາດໃຫຍ່ແຫ່ງໜຶ່ງ ຂອງ ອາຊີຕາເວັນອອກສ່ຽງໃຕ້, ເຂດພູຫີນປູນແຂວງຄຳມ່ວນ - ພູມີຫັດ ຟອງຍາ - ແກບັງ. ເຂດພູຫີນປູນແຂວງຄາມ່ວນ - ພູມີຫັດ ຟອງຍາ - ແກບັງ ແມ່ນພື້ນທີ່ອັນກວ້າງໃຫຍ່ ກວມເອົາພື້ນທີ່ ທີ່ຍາວເຖິງ 230 ກມ ຕັ້ງຍາວຢຽດຕາມສັນຂອງສາຍພູຫລວງ ແຕ່ທິດເໜືອ ຫາທິດໃຕ້. ປ່າສະຫງວນຫີນໜາມໜໍ່ ກໍຍັງເປັນຕົວແທນທີ່ສຳຄັນ ຂອງອົງປະກອບທາງດ້ານລະບົບນິເວດປ່າດົງດິບຊຸ່ມຢູ່ໃນເຂດສາຍພູຫລວງ, ຊຶ່ງແມ່ນ 200 ຂົງເຂດທີ່ສຳຄັນທາງດ້ານນິເວດຂອງໂລກ ໂດຍອີງຕາມການຈັດປະເພດຂົງເຂດລະບົບນິເວດໂລກຂອງ ທ່ານ by Olson et al, (2001) ວ່າ: ຄວາມອຸດົມສົມບູນຂອງລະບົບນິເວດ ຕັ້ງຢູ່ໃນປ່າດົງດິບທາງພາກກາງ ທິດເໜືອຂອງສາຍພູຫລວງ ແລະ ລະບົບນິເວດນ້ຳຈືດ 2 ແຫ່ງ (ພາກເໜືອ ແລະ ພາກໃຕ້ຫວຽດນາມ.




ພາບລວມ ພື້ນທີ່ຜາຫີນປູນ ຄຳມ່ວນ -ຟອງຍາ -ແກບັງ (ແຫລ່ງຂໍ້ມູນ: http://www.sges.auckland.ac.nz/sges_research/karst.shtm)

ຜາຫີນປູນປ່າສະຫງວນແຫ່ງຊາດ ໜາມໜໍ່ ແລະອຸທິຍານແຫ່ງຊາດ ຟອງຍາ-ແກບັງອາດກ່າວໄດ້ວ່າເປັນເຂດພູພຽງທີ່ກວ້າງໃຫຍ່ ແລະຢູ່ຈຸດທີ່ມີຄວາມສູງເໜືອລະດັບນ້ຳທະເລ. ຈຸດທີ່ສູງຂອງ ຫີນໜາມໜໍ່ທີ່ສາມາດສັງເກດໄດ້ແມ່ນມີຄວາມສູງຫລາຍກວ່າ 500ແມັດ

ຈາກລະດັບນ້ຳທະເລ ທີ່ປະກອບມີຜາຫີນປູນຕັ້ງລຽນ ສະລັບຊັບຊ້ອນກັນຕາມພື້ນທີ່ ພ້ອມດ້ວຍພູຫີນປູນ ປະສົມກັບຜາຫີນປູນທີ່ແຫລມຄົມ ຄ້າຍຄືກັນກັບຫີນແກຣນິດ ຊຶ່ງອາດຈະຢູ່ຕົມກັບຜາຫີນປູນ ແລະ ຖືກເຊາະເຈື່ອນເປັນເສດຫີນພົ້ນຂື້ນຕາມໜ້າດິນ, ຊຶ່ງສິ່ງຜົນສະທ້ອນເຖິງປະເພດຂອງດິນ ປະກອບມີ: ຄວາມໜາຂອງດິນ, ເນື້ອດິນ, ຄວາມເປັນກົດ ແລະ ດິນທີ່ເກີດຈາກການເນົ່າເປື່ອຍຂອງໃບໄມ້. ຄວາມອຸດົມສົມບູນຂອງດິນເຫລົ່ານີ້ ຈະເປັນຜົນພວງໃຫ້ກັບອົງປະກອບ ແລະ ຄວາມອຸດົມສົມບູນຂອງພືດພັນນາໆຊະນິດ. ຍ້ອນແນວນັ້ນ, ຈຶ່ງເຮັດໃຫ້ເຂດພູພຽງແຫ່ງນີ້ມີ ປ່າໄມ້ຢູ່ຕາມພື້ນທີ່ເຂດຕີນພູ ແລະ ເຂດປ່າດົງດິບເຂດຮ້ອນຊຸ່ມມໍລະສຸມ ( ສູງກວ່າ 700 ແມັດ). ການຈະເລີນເຕີບໂຕຂອງພືດພັນໄດ້ຊ່ວຍການິດກຸ່ມ ຂອງຊະນິດພັນພືດທີ່ມີຄວາມແຕກຕ່າງກັນ ຈາກພັນພືດທີ່ເກີດຂື້ນໃນເຂດຮ້ອນຊຸ່ມ ແລະ ລະດູການໃນທິດຕາເວັນອອກຂອງຜາຫີນປູນຄຳມ່ວນ-ຟອງແກ ຍາບັງ.

ປ່າສະຫງວນແຫ່ງຊາດຫີນໜາມໜໍ່ຕັ້ງຢູ່ຈຸດໃຈກາງດ້ານພູມມີປະເທດຕົ້ນຕໍ ຂອງ ສປປ ລາວ, ຍາວຢຽດຕາມສາຍພູຫລວງ ແຕ່ເໜືອຫາໃຕ້ ຕາມຊາຍແດນລາວ-ຫວຽດນາມ ແລະ ເລິກເຂົ້າໃນພາກກາງຂອງ ສປປ ລາວ ຊຶ່ງນອນຢູ່ໃນປ່າເຂດຮ້ອນຊຸ່ມ ເຂດປ່າດົງດິບອິນດູຈີນ (Udvardy, 2005). ສາຍພູຫລວງແຫ່ງນີ້ ມີຄວາມສາຄັນໃນການປ້ອງກັນ ລະຫວ່າງປ່າໄມ້ເຂດມໍລະສຸມຂອງລາວ ກັບເຂດເນີນສູງທີ່ຊຸ່ມຊື່ນຂອງ ຫຽວດນາມ; ການກຳເນີດຫີນໜາມໜໍ່ ໃນທິດຕາເວັນຕົກຂອງເຂດຜາຫີນປູນຄຳມ່ວນ-ຟອງແກ ຍາບັງ ຕັ້ງແຈກຢາຍຢູ່ຕາມພື້ນທີ່ຕ່າງໆ ຢູ່ໃນເຂດປ່າໄມ້ ເຂດລົມມໍລະສຸມຂອງປະເທດໄທ (Udvardy, 2005). ນອກຈາກນັ້ນ, ປ່າສະຫງວນແຫ່ງຊາດຫີນໜາມໜໍ່ຍັງເປັນຈຸດຜ່ານ ຂອງເຂດເຊື່ອມຕໍ່ລະຫວ່າງເຂດຮ້ອນທາງພາກເໜືອ ກັບເຂດຮ້ອນຊຸ່ມທາງພາກໃຕ້ (Sterling & Hurley, 2005)

**ທໍລະນີວິທະຍາ**

ຄວາມສະລັບຊັບຊ້ອນ ແລະ ຄວາມຫລາກຫລາຍທາງດ້ານທໍລະນີ ແລະ ລັກສະນະການກຳເນີດ ແລະ ການປ່ຽນແປງ ດ້ານທໍລະນີວິທະຍາຂື້ນ ໃນເຂດປ່າສະຫງວນແຫ່ງຊາດຫີນໜາມໜໍ່ ຊຶ່ງກໍ່ໃຫ້ເກີດມີພື້ນທີ່ຜາຫີນປູນກວ້າງໃຫຍ່ທີ່ສວຍສົດງົດງາມ ແລະ ມີຄວາມເປັນເອກະລັກທີ່ໂດດເດັ່ນທາງທຳມະຊາດ. ປະຫວັດຄວາມເປັນມາທາງດ້ານທໍລະນີກ່ຽວກັບຫີນທີ່ເກີດຂື້ນຕາມໜ້າດິນຢູ່ໃນຍຸກຖ່ານຫີນ ກັບຜາຫີນປູນທີ່ຜ່ານວິວັດທະນາການມາຮອດປະຈຸບັນ. ລັກສະນະທາງພູມີທັດຂອງ ພູຫີນປູນ ຫີນໜາມໜໍ່ ແມ່ນພູພຽງຫີນປູນທີ່ຖືກຕັດແຍກອອກ ມີພື້ນທີ່ເກືອບຕິດຈອດທັງໝົດກັບ ກຳແພງຫີນປູນ ຫລື ໜ້າຜາສູງເຖິງ 500 ແມັດເໜືອລະດັບນ້ຳທະລາສ່ວນພື້ນທີ່ຂ້ອນຂ້າງຮາບພຽງແລະຕ່ຳ◌່ກວ່າ, ຄົນທ້ອງຖິ່ນເອີ້ນວ່າ ກອນ. ພູຫີນປູນຖືກເຊາະເຈືອນກາຍເປັນຍອດແຫລມຄ້າຍຄືກັນກັບກຸ່ມຮູບຈອຍ ພ້ອມທັງເປັນຜາຫີນປູນສູງຊັນທີ່ມີຮອຍແຕກລຽນກັນຕາມໜ້າດິນ ແລະມີລັກສະນະໜ້າດິນທີ່ສວຍສົດງົດງາມພ້ອມທັງມີຮ່ອງຮອຍນ້ຳເຊາະເຈື່ອນຕາມໜ້າຜາຫີນ ແລະ ຈອມຜາ. ແມ່ນ້ຳເຊບັ້ງໄຟໄຫລລອດຖ້ຳມີລວງຍາວປະມານ 6.4 ກມ ຜ່ານຜາຫີນປູນ ກໍໃຫ້ເກີດມີນ້ຳລອດຖ້ຳ ທີ່ໃຫຍ່ທີ່ສຸດໃນໂລກ, ຊຶ່ງປະດັບປະດັບໄປດ້ວຍຫີນຍ້ອຍທີ່ສວຍສົດງົດງາມຂະໜາດໃຫຍ່ຈຳນວນຫລາຍ.

**ລະດັບຄວາມສູງຈາກໜ້ານຳ◌້ທະເລ**

100 ແມັດ ຫາ 1,429 ແມັດ

**ສະພາບອາກາດ**

ປ່າສະຫງວນແຫ່ງຊາດຫີນໜາມໜໍ່ ຕັ້ງຢູ່ເຂດອາກາດລົມມໍລະສຸມ ຂອງອາຊີຕາເວັນອອກສ່ຽງໃຕ້, ຊຶ່ງໃນລະດູໜາວ (ພະຈິກ - ກຸມພາ), ລົມມໍລະສຸມທາງທິດຕາເວັນອອກສ່ຽງເໜືອຈະມີລັກສະນະອາກາດໜາວແລ້ງ ແລະມີຝົນຕົກເບົາເປັນແຕ່ລະໄລຍະ. ສຳລັບລະດູຮ້ອນ (ພຶດສະພາ -ສິງຫາ), ລົມພັດມາຈາກທິດຕາເວັນຕົກສ່ຽງໃຕ້ ນຳເອົາຄວາມຊຸ່ມຈາກທະເລອັນດາມັນ ແລະ ອ່າວໄທ ເຂົ້າໄປສູ່ເຂດຕ່ຳ ຂອງ ສປປ ລາວ. ຊຶ່ງເປັນບ່ອນທີ່ມີສະພາບອາກາດຮ້ອນ ທີ່ເປັນສາເຫດກໍ່ໃຫ້ເກີດ ປະລິມານນ້ຳຝົນຈຳນວນຫລາຍ ໃນໄລຍະນີ້ ຊຶ່ງລົມມໍລະສຸມທາງທິດຕາເວັນຕົກສ່ຽງໃຕ້ນີ້ແມ່ນເປັນອາກາດທີ່ອົບອຸ່ນ ແລະ ຊຸ່ມສູງ. ສຳລັບປ່າສະຫງວນແຫ່ງຊາດຫີນໜາມໜໍ່ລົມມໍລະສຸມຕາເວັນຕົກສ່ຽງໃຕ້ ເລີ່ມແຕ່ເດືອນພຶດສະພາ ຈົນຮອດເດືອນສິງຫາ ແລະ ຄ່ອຍໆໝົດໄປໃນກາງເດືອນຕຸລາ. ສະພາບອາກາດກໍໝູນວຽນໃນແຕ່ລະໄລຍະ ຂອງການປ່ຽນແປງ ຈົນຮອດກາງເດືອນພະຈິກ ເມື່ອມີລົມມໍລະສຸມຕາເວັນອອກສ່ຽງເໜືອເຂົ້າມາ ແລະປະລິມານນ້ຳຝົນຕົກເປັນໄລຍະໆ ແລະ ບໍ່ຕົກແຮງ ຈຶ່ງເຮັດໃຫ້ອາກາດເຢັນ ແລະ ຄວາມຊຸ່ມກໍຫລຸດຕ່ຳ◌່ລົງ. ລົມມໍລະສຸມຕາເວັນອອກສ່ຽງເໜືອໝົດໄປໃນທ້າຍເດືອນ ກຸມພາ ເມື່ອເວລາເລີ່ມປ່ຽນເປັນລະດູຮ້ອນ ແລະ ລະດູແລ້ງ. ໃນປີ 2007,

ປະລິມານນໍ້າຝົນປະຈໍາປີແມ່ນ 1.480 ມມ, ອີງຕາມຮູບແບບທົ່ວໄປຂອງລົມມໍລະສຸມອາຊີຕາເວັນອອກສ່ຽງໃຕ້. ອຸນຫະພູມສະເລ່ຍປະຈໍາປີ ແມ່ນ 25.7°C (ໂດຍມີລະດັບອຸນຫະພູມລະຫວ່າງ 11 – 40°C).

## ຊີວະນາໆພັນ

ປ່າສະຫງວນແຫ່ງຊາດຫີນໜາມໜໍ່ ໄດ້ຖືກຮັບຮູ້ວ່າເປັນພື້ນທີ່ ທີ່ມີຄວາມສໍາຄັນໃນລະດັບໂລກ ຕໍ່ການອະນຸລັກ ຊີວະນາໆພັນ ຍ້ອນຄວາມຫລາກຫລາຍດ້ານຖິ່ນທີ່ຢູ່ອາໄສ ແລະ ປ່າໄມ້ປະເພດຕ່າງໆ ຕາມໜ້າດິນຂອງພື້ນທີ່ປ່າສະຫງວນ ຊຶ່ງກໍ່ໃຫ້ເກີດມີສັດສາວາສິ່ງ ແລະ ພືດພັນນາໆຊະນິດ ລວມທັງຊະນິດພັນທີ່ໃກ້ຈະສູນພັນໃນ ລະດັບໂລກ, ຊະນິດພັນສະເພາະຖິ່ນ ແລະ ຊະນິດພັນທີ່ອາໄສຢູ່ຕາມຜາຫີນ. ປ່າສະຫງວນແຫ່ງຊາດຫີນໜາມໜໍ່ ຕັ້ງຢູ່ຈຸດເຂດກາງຂອງພູຫີນປູນອິນດູຈີນ ທີ່ຕໍ່ກັນກັບ ສາຍພູຫລວງ. ປ່າສະຫງວນແຫ່ງດັ່ງກ່າວແມ່ນນອນຢູ່ໃນຂອບເຂດຂອງ ເຂດປ່າຝົນ ທາງທິດເໜືອຂອງສາຍພູຫລວງ, ຊຶ່ງແມ່ນໜຶ່ງໃນຈໍານວນ 200 ເຂດນິເວດລະດັບໂລກທີ່ຖືວ່າ ມີຄວາມສໍາຄັນທີ່ສຸດ ຕໍ່ການອະນຸລັກຊີວະນາໆພັນຂອງໂລກ. ນອກຈາກນັ້ນ, ຢູ່ພາຍໃນເຂດນິເວດໃຈກາງພູຫີນປູນ ອິນດູຈີນ ຍັງໄດ້ຖືກລະບຸວ່າ ເປັນພູມີທັດບຸລິມະສິດ ທີ່ຫລໍ່ແຫລມ ແລະ ມີຄວາມສໍາຄັນລະດັບໂລກ ສໍາລັບການອະນຸລັກສັດລ້ຽງລູກດ້ວຍນົມຂະໜາດນ້ອຍ(ລີງ/ primate) ແລະ ຊະນິດພັນສະເພາະຂອງເຂດພູຫີນປູນ.

## ຖິ່ນທີ່ຢູ່ອາໄສຕົ້ນຕໍ/ປະເພດປ່າ

ພາຍໃນເຂດປ່າສະຫງວນແຫ່ງຊາດຫີນໜາມໜໍ່ ໄດ້ລະບຸໄວ້ວ່າມີຖິ່ນທີ່ຢູ່ອາໄສ 11 ປະເພດຕົ້ນຕໍ, ປະກອບມີຖິ່ນທີ່ຢູ່ອາໄສປ່າໄມ້ 7 ປະເພດ,ຖິ່ນທີ່ຢູ່ອາໄສໜອງບຶງ 2 ປະເພດ,ຜາຫີນລ້ອນ(ປ່າໄມ້ທີ່ບັງເກີດຂຶ້ນຢູ່ຕາມຜາຫີນປູນ, ປ່າຫ່າງ), ແລະ ຖິ່ນທີ່ຢູ່ອາໄສໃນຖໍ້າ.

ປະເພດຂອງພືດພັນອີງຕາມການວິເຄາະຈາກດາວທຽມ Landsat 8 ໃນຄັ້ງວັນທີ 20 ມີນາ 2015  ສະແດງໃຫ້ເຫັນດັ່ງລຸ່ມນີ້:

| ປະເພດ | ເນື້ອທີ່ຄາດຄະເນ (ຮຕ) | **%** ຂອງເນື້ອທີ່ທັງໝົດ |
|---|---:|---:|
| ປ່າເຂດຜາຫີນປູນ | 28,833 | 32.58 |
| ປ່າເຂດຜາຫີນປູນແລ້ງ | 7,321 | 8.27 |
| ຜາຫີນປູນ | 2,486 | 2.81 |
| ປ່າດົງດິບ | 11,886 | 13.43 |
| ປ່າດົງດິບແລ້ງ | 16,828 | 19.02 |
| ປ່າປະສົມ | 8,399 | 9.49 |
| ປ່າໄມ້ປ່ອງ | 4,094 | 4.63 |
| ປ່າເຫລົ່າ/ປ່າແຫລ | 2350 | 2.66 |
| ແມ່ນໍ້າ | 81 | 0.09 |
| ປ່າຮົ່ມເນີນພູ/ທີ່ລະບຸບໍ່ໄດ້ | 4308 | 4.87 |
| ເຂດເນີນພູທີ່ມີການຈູດປ່າ | 1702 | 1.92 |
| ທົ່ງນາ (ນາເຂົ້າ) | 21 | 0.02 |
| ບ້ານ/ເສັ້ນທາງ | 177 | 0.20 |
| ລວມທັງໝົດ | **88,487** | **100** |

## ສັດປົກ

ການສໍາຫລວດຖິ່ນທີ່ຢູ່ອາໄສ ເທິງໜ້າດິນ ຢູ່ເຂດຫີນໜາມໜໍ່ໄດ້ຈົດບັນທຶກສັດມີກະດູກສັນຫລັງຈໍານວນ 377 ຊະນິດພັນ ລວມມີສັດລ້ຽງລູກດ້ວຍນົມ 55 ຊະນິດ, ນົກ 184 ຊະນິດ, ສັດເລືອຄານ 21 ຊະນິດ, ສັດເຄິ່ງບົກເຄິ່ງນໍ້າ 21 ຊະນິດ ແລະ ປາ 96 ຊະນິດ. ໃນນີ້, ມີ 37 ຊະນິດພັນ ທີ່ມີຄວາມສໍາຄັນຕໍ່ການອະນຸລັກ ໂດຍມີ 11 ຊະນິດພັນ ທີ່ຖືກໄພຂົ່ມຂູ່ໃນລະດັບໂລກ. ເດັ່ນທີ່ສຸດແມ່ນຫີນໜາມໜໍໄດ້ປົກປັກຮັກສາ ຈໍາພວກລີງ ເຈັດຊະນິດ, ໃນນີ້ມີ ຫ້າຊະນິດທີ່ໃກ້ຈະສູນພັນໃນລະດັບໂລກ. ຂາແດງ (Red-shanked Douc Langur *Pygathrix nemaeus*) ແລະ ທະນີແກ້ມຂາວ (Southern White-cheeked Gibbon *Nomascus siki*) ລ້ວນແຕ່ເປັນຊະນິດພັນທີ່ມີຄວາມສາຄັນທີ່ສຸດຂອງປ່າສະຫງວນແຫ່ງຊາດຫີນໜາມໜໍ່, ແລະ ຄຽງຄູ່ກັນກັບ

ຄ່າງຮາຕິງ (Black Langur *Trachypithecus hatinhensis*), ລ້ວນແຕ່ແມ່ນຊະນິດພັນທີ່ສ່ຽງຈະສູນພັນໃນລະດັບໂລກ. ຫີນໜາມໜໍ່ ເປັນບ່ອນລີ້ໄພ ຂອງປະຊາກອນ ຂ່າງທັງສອງຊະນິດ ທີ່ມີຂະໜາດໃຫຍ່ ແລະ ເປັນພຽງແຫ່ງດຽວຂອງໂລກ. ສັດລ້ຽງລູກດ້ວຍນົມທີ່ໃກ້ຈະສູນພັນໃນລະດັບໂລກ ຊະນິດອື່ນໆ ລວມມີ: ລິງເສນ(ກະພຶດ,ລິງໝູ/Bear Macaque *Macaca arctoides*), ລິງກັງ (Pig-tailed Macaque *Macaca nemestrina*), ນາກໃຫຍ່ຂົນລຽບ(Smooth-coated Otter *Lutrogale perspicillata*), ເຍືອງ(Southern Serow *Capricornis sumatraensis*), ແລະ ກວາງ(Sambar Deer *Rusa unicolor*).

ມີເຈຍທັງໝົດ 25 ຊະນິດ ໄດ້ຖືກຄົ້ນພົບຢູ່ເຂດຫີນໜາມໜໍ່, ລວມທັງ ສາມຊະນິດພັນໃໝ່ ສໍາລັບ ສປປ ລາວ, ເຊັ່ນ: Horsfield’s Fruit Bat *Cynopterus horfieldi,* Harlequin Bat *Scotomanes ornatus* and Great Evening Bat (*Ia io)* (Vinton and Walston, 1999).

**ສັດລ້ຽງລູກດ້ວຍນົມຊະນິດພັນ ທີ່ໄດ້ຮັບຄວາມສົນໃຈໃນການອະນຸລັກ ຢູ່ເຂດປ່າສະຫງວນແຫ່ງຊາດຫີນໜາມໜໍ່**

| ຊື່ທ້ອງຖິ່ນ | ຊື່ທົ່ວໄປ | ຊື່ວິທະຍາສາດ | ຄວາມສຳຄັນລະດັບຊາດ | ປະເພດຄວາມສ່ຽງໃນລະດັບສາກົນ | ສະຖານະພາບຄວາມສ່ຽງພາຍໃນປະເທດ |
|---|---|---|---|---|---|
| ລີ່ນຊະນິດຕ່າງໆ | Pangolin species | *ຊະນິດພັນທີ່ຍັງບໍ່ໄດ້ລະບຸຕົວ* | - | - | - |
| ກະແຕເໜືອຫາງຍາວ | Mainland Slender-tailed Treeshrew | *Dendrogale murina* | - | 0 | LKL |
| ລິງກັງ | Pig-tailed Macaque* | *Macaca nemestrina* | - | VU | PARL |
| ລິງຜົມແບ່ງ(ລິງອາຊາມ) | Assamese Macaque* | *Macaca assamensis* | - | VU | PARL |
| ລິງວອກ(ລິງແດງ) | Rhesus Macaque* | *Macaca mulatta* | - | GNT | PARL |
| ລິງເສນ, (ກະພຶດ,ລິງໝູ) | Bear Macaque* | *Macaca arctoides* | - | VU | PARL |
| ໂຄ່ງ | Francois's Langur* | *Semnopithecus francoisi* | - | DD | PARL |
| ຂາແດງ | Red-shanked Douc Langur* | *Pythagrix nemaeus* | HNP | EN | ARL |
| ທະນີແກ້ມຂາວ | Southern White-cheeked Gibbon* | *Nomascus leucogenys* | HNP | DD | PARL |
| ບ່າງລື້ | Black Giant Squirrel* | *Ratufa bicolor* | - | 0 | PARL |
| ກະຮອກ | Inornate Squirrel | *Callosciurus inornatus* | - | VU | LKL |
| ກະເລັນລາຍຫູຍາວ | Cambodian Striped Squirrel* | *Tamiops rodolphii* | - | | |
| ເໝັ້ນ | East Asian Porcupine | *Hystrix brachyuran* | - | VU | 0 |
| ໝີຊະນິດຕ່າງໆ | Bear species | *ຊະນິດພັນທີ່ຍັງບໍ່ໄດ້ລະບຸຕົວ* | - | - | - |
| ໝູລຶ່ງ | Hog Badger | *Arctonyx collaris* | - | 0 | LKL |
| ນາກໃຫຍ່ | Large Otter species | *ຊະນິດພັນທີ່ຍັງບໍ່ໄດ້ລະບຸຕົວ* | - | - | - |
| ເຫງັນໝີຂໍ | Binturong | *Arctictis binturong* | HNP | 0 | ARL |
| ເສືອຂະໜາດກາງ ຊະນິດຕ່າງໆ | Medium-sized Cat species | *ຊະນິດພັນທີ່ຍັງບໍ່ໄດ້ລະບຸຕົວ* | - | - | - |
| ເສືອໂຄ່ງ | Tiger | *Panthera tigris* | ANP | EN | ARL |
| ເສືອຂະໜາດໃຫຍ່ ຊະນິດຕ່າງໆ | Large Cat species | *ຊະນິດພັນທີ່ຍັງບໍ່ໄດ້ລະບຸຕົວ* | - | - | - |
| ໝູຊະນິດຕ່າງໆ | Pig species | *ຊະນິດພັນທີ່ຍັງບໍ່ໄດ້ລະບຸຕົວ* | - | - | - |
| ກວາງ | Sambar* | *Rusa unicolor* | - | 0 | PARL |
| ຟານເຂົາໃຫຍ່(ຟານດົງ) | Large-antlered Muntjac | *Muntiacus vuquangensis* | - | N/A | PARL |
| ເມີຍ | Gaur | *Bos gaurus* | HNP | VU | ARL |
| ເຍືອງ | Southern Serow* | *Capricornis milneedwardsii* | - | VU | PARL |

ຊະນິດພັນທີ່ໝາຍເຄື່ອງໝາຍດາວ ໃສ່ນັ້ນແມ່ນໄດ້ຖືກບັນທຶກຢູ່ໃນຊ່ວງການສຳຫລວດຊີວະນາໆພັນທີ່ດຳເນີນການໃນປີ

2015 (Berkmuller, 2013).

ຊະນິດພັນນົກທີ່ມີສະເໜ່ ປະກອບມີ ສີ່ຊະນິດພັນ ຄື: ນົກກົກ (Bucerotidae), ໜຶ່ງໃນນັ້ນກໍແມ່ນນົກກົກຄໍແດງ( the Rufous-necked Hornbill *Aceros nipalensis*), ຊຶ່ງໃກ້ສູນພັນໃນລະດັບໂລກ. ນອກຈາກນັ້ນ ຍັງມີຊະນິດພັນອື່ນອີກທີ່ໃກ້ຈະສູນພັນໃນລະດັບໂລກ ຄື: ນົກວູ່ວາວ(Crested Argus *Rheinardia ocellata*). ສາລັບນົກຈາພວກ ນົກຈາບ ( The Sooty Babbler *Stachyris herberti* ) ແມ່ນຊະນິດພັນສະເພາະຖິ່ນ ຂອງ ເຂດພູຫີນປູນກາງອິນດູຈີນ.

ປະເພດນົກ ທີໄດ້ຮັບຄວາມສົນໃຈໃນການອະນຸລັກ ຢູ່ເຂດປ່າສະຫງວນແຫ່ງຊາດ ຫີນໜາມໜໍ່

| ຊື່ທ້ອງຖິ່ນ | ຊື່ທົ່ວໄປ ເປັນພາສາ ອັງກິດ | ຊື່ວິທະຍາສາດ | ຄວາມສໍາຄັນ ລະດັບຊາດ | ປະເພດຄວາມ ສ່ຽງໃນ ລະດັບ ສາກົນ | ສະຖານະພາບ ຄວາມສ່ຽງ ພາຍໃນ ປະເທດ |
|---|---|---|---|---|---|
| ໄກ່ຂົວນິນ | Siamese Fireback | *Lophura diardi* | - | VU | PARL |
| ນົກວູ່ວ່າວ(ນົກຍູງທອງ) | Crested Argus | *Rheinardia ocellata* | HNP | VU | ARL |
| ນົກຫົວຂວນດ່າງເອິກລາຍຈຸດ | Fulvous-breasted Woodpecker | *Dendrocopos macei* | - | 0 | LKL |
| ນົກໄຊຄໍແດງ | Red-collared Woodpecker[1] | *Picus rabieri* | - | VU | 0 |
| ນົກກົກຄໍຄໍາ | Great Hornbill | *Buceros bicornis* | HNP | 0 | ARL |
| ນົກໝານ້ອຍ(ນົກກົກແກງ) | Brown Hornbill | *Ptilolaemus tickelli* | - | GNT | PARL |
| ນົກກົກຄໍແດງ | Rufous-necked Hornbill[2] | *Aceros nipalensis* | HNP | VU | ARL |
| ນົກກົກຄໍເອີມ | Wreathed Hornbill | *Rhyticeros undulates* | - | 0 | ARL |
| ນົກກາເວົາ | Coral-billed Ground Cuckoo | *Carpococcyx renauldi* | - | GNT | 0 |
| ນົກເປົ້າຫາງເຂັມກົ້ນເຫຼືອງ | Yellow-vented Green Pigeon | *Treron seimundi* | - | GNT | 0 |
| ນົກກະແຕຫ້ອຍ | River Lapwing[2] | *Vanellus duvaucelii* | INP | 0 | ARL |
| ແຫລວປາຫົວມົ່ນນ້ອຍ | Lesser Fish Eagle | *Ichthyophaga humilis* | INP | GNT | ARL |
| ແຫລວນ້ອຍ | Pied Falconet | *Microhierax melanoleucos* | - | GNT | LKL |
| ນົກກະເຕັນເອິກຟ້າ | Blue-rumped Pitta | *Pitta soror* | - | GNT | PARL |
| ນົກແຕວແລວຂຽວ | Bar-bellied Pitta | *Pitta ellioti* | - | GNT | PARL |

[1] ພົບເຫັນໃນໄລຍະປະມານ 15 ກມ ດ້ານຕາເວັນຕົກຂອງ ປ່າສະຫງວນແຫ່ງຊາດ ຫີນໜາມໜໍ່ ຢູ່ພື້ນທີ່ປ່ານອກເຂດຫີນປູນ Found about 15 km to the west of Hin Nam No National Protected Area in an area of forest on non-calcareous rock

[2] ພົບເຫັນຢູ່ບາງຈຸດ ດ້ານໃຕ້ ຂອງປ່າສະຫງວນຫີນໜາມໜໍ່, ຢູ່ເທິງຍອດນໍ້າຂອງ ເຊບັ້ງໄຟ
Found some distance to the south of Him Nam No, in the headwaters of the Xe Bang Fai

| | | | | | |
|---|---|---|---|---|---|
| ນົກກະຈິວ | White-winged Magpie | *Urocissa whiteheadi* | - | GNT | PARL |
| ນົກພະຍາໄຟ | Indochinese Green Magpie | *Cissa hypoleuca* | - | GNT | PARL |
| ນົກຈາບ | Sooty Babbler | *Stachyris herberti* | - | VU | 0 |
| ນົກກະຈາບຄໍແດງ | Rufous-throated Fulvetta[1] | *Alcippe rufogularis* | | GNT | 0 |

ການສຳຫລວດສັດເລືອຄານ ແລະ ສັດເຄິ່ງບົກເຄິ່ງນ້ຳ ຄັ້ງດຽວທີ່ໄດ້ປະຕິບັດຢູ່ເຂດ ຫີນໜາມໜໍ່ (Stuart, in: Vinton and Walston, 1999) ໄດ້ເກັບກາຂໍ້ມູນ ແລະ ສັງເກດເຫັນ ສັດເລືອຄານ ແລະ ສັດລ້ຽງລູກດ້ວຍນົມ 46 ຊະນິດພັນ. ເຕົ່າທັງໝົດ ຫົກຊະນິດທີ່ໄດ້ເກັບກຳນັ້ນ ລ້ວນແຕ່ແມ່ນ ຊະນິດພັນທີ່ສຳຄັນ. ໃນນີ້ລວມມີປາຝາອາຊີ(Asiatic softshell *Amyda carilaginea), ປາຝາຄໍເອີ້ນ(*Wattle-necked Softshell *Palea steindacheri), ເຕົ່າຫົບ(*Yellow-headed Temple Turtle *Hieremys annadlaei), ເຕົ່າໃບໄມ້(* Asian Leaf Turtle *Cyclemys dentata),* ເຕົ່າສາມລ່ຽມກົ່ງ (Keeled Box Turtle *Pyxidea mouhotii), ແລະ ເຕົ່າເພັກ(* Elongated Tortoise *Indotestudo elongate*).

ໄດ້ເກັບກຳຂໍ້ມູນຂອງປາທັງໝົດ 130 ຊະນິດຢູ່ແມ່ນ້ຳເຊບັ້ງໄຟ, ໃນນີ້ ມີ 25 ຊະນິດທີ່ຖືກພົບເຫັນຢູ່ພາຍໃນ ແລະ ຢູ່ບໍລິເວນອ້ອມຮອບ ປ່າສະຫງວນແຫ່ງຊາດ ຫີນໜາມໜໍ່. ຢ່າງໜ້ອຍມີສອງຊະນິດພັນທີ່ເປັນ ຊະນິດສະເພາະຖິ່ນ ຂອງແມ່ນ້ຳເຊບັ້ງໄຟ. ນອກຈາກນັ້ນແລ້ວ, ປາ 29 ຊະນິດ ໃນຈຳນວນ 130 ຊະນິດ (ຫລື 17.5%) ຂອງຊະນິດພັນປາ ທີ່ໄດ້ສຳຫລວດ ໃນປີ 1996 ນັ້ນ ຜ່ານມາແມ່ນຍັງບໍ່ທັນໄດ້ຕັ້ງຊື່ເທື່ອ (Kottelat, 1998).

**ສັດທີ່ອາໄສຢູ່ໃນຖ້ຳ**

ການສຳຫລວດເບື້ອງຕົ້ນກ່ຽວກັບ ຖິ່ນທີ່ຢູ່ອາໄສໃນຖ້ຳ ຢູ່ຫີນໜາມໜໍ່ ຫວ່າງບໍ່ດົນມານີ້ ໄດ້ບັນທຶກ ຊະນິດພັນສັດເອົາໄວ້ຢ່າງໜ້ອຍຈຳນວນ 70 ຊະນິດ, ໃນນັ້ນມີ 7 ຊະນິດ ທີ່ເປັນຊະນິດພັນຖືກຄົ້ນພົບໃໝ່ ແລະ ຫ້າຊະນິດທີ່ເປັນຊະນິດພັນສະເພາະຖິ່ນ. ຊຶ່ງປະກອບດ້ວຍຊະນິດພັນປາທີ່ອາໄສຢູ່ໃນຖ້ຳ *Bangana musaei* ຊຶ່ງເປັນຊະນິດພັນສະເພາະຖິ່ນ ທີ່ຖືກໄພຂົ່ມຂູ່ໃນລະດັບໂລກ. ຖ້ຳຕ່າງໆ ໃນເຂດປ່າສະຫງວນ ຫີນໜາມໜໍ່ ຍັງເປັນຖິ່ນທີ່ຢູ່ອາໄສ ຂອງແມງມຸມທີ່ໃຫຍ່ທີ່ສຸດໃນໂລກ(Giant Huntsman Spider *Heteropoda maxima*) ຕາມຄວາມຍາວໃນເວລາກາງຂາອອກ.

ນອກຈາກນັ້ນ ຍັງມີການຄົ້ນພົບຖ້ຳໃຕ້ນ້ຳ ຫລາຍແຫ່ງຢູ່ເຂດປ່າສະຫງວນແຫ່ງຊາດ ຫີນໜາມໜໍ່ ທີ່ເປັນປະໂຫຍດສຳລັບປາ ໃນລະດູແລ້ງ ຕົວຢ່າງ: ຮູແປວປາທີ່ຮັບຮູ້ກັນຢ່າງກ້ວາງຂວາງ "ປາຖ້ຳ" ເປັນຊະນິດພັນປາທີ່ເປັນເຈົ້າຂອງຖິ່ນອາໄສຢູ່ໃນຖ້ຳໃຕ້ນ້ຳ ໃນໄລຍະລະດູແລ້ງ. ປາເຫລົ່ານີ້ ຈະປະກົດໃຫ້ເຫັນ ຢູ່ຕາມຖ້ຳຕ່າງໆ ທີ່ປະກົດໃຫ້ເຫັນຢູ່ຕາມແມ່ນ້ຳໃກ້ຄຽງ ໃນໄລຍະເລີ່ມຕົ້ນລະດູຝົນເມື່ອມີນ້ຳຖ້ວມເຂົ້າໃນປາກຖ້ຳ ຈາກຝົນທີ່ຕົກໜັກ. ໃນທ້າຍລະດູຝົນ ປາກໍຈະກັບຄືນເຂົ້າໄປໃນຖ້ຳຄືເກົ່າ.

## ໄພຂົ່ມຂູ່ຕົ້ນຕໍ

ໄພຂົ່ມຂູ່ທາງກົງ ໄດ້ຖືກໄຈ້ແຍກ ເປັນໄພຂົ່ມຂູ່ຕ່າງໆ ທີ່ເກີດຈາກບຸກຄົນພາຍນອກ, ໄພຂົ່ມຂູ່ທີ່ເກີດຈາກ ການນຳໃຊ້/ປະຊາຊົນທ້ອງຖິ່ນ ແລະ ໄພຂົ່ມຂູ່ອື່ນໆ. ຢູ່ໃນກອງປະຊຸມສຳມະນາ ທີ່ໄດ້ຈັດຂຶ້ນໃນວັນທີ 25 ກັນຍາ 2013 ໄດ້ຈັດລຳດັບໄພຂົ່ມຂູ່ທາງກົງ ໃນລັກສະນະທີ່ ຫ້ອງການຄຸ້ມຄອງປ່າສະຫງວນແຫ່ງຊາດ ສາມາດມີອິດທິພົນໄດ້ ໂດຍຄຳນຶງເຖິງ ເງື່ອນໄຂຕໍ່ໄປນີ້: ຊຸມຊົນ ເຫັນໄດ້ເຖິງຄວາມສຳຄັນ; ພື້ນທີ່ ທີ່ຖືກກະທົບ; ຄວາມໜາແໜ້ນຂອງໄພຂົ່ມຂູ່; ຄວາມເປັນໄປໄດ້ທາງການເມືອງ ທີ່ຈະດຳເນີນການບາງຢ່າງ ກ່ຽວກັບ ໄພຂົ່ມຂູ່ນັ້ນ; ຄວາມສາມາດຂອງສັງຄົມ ໃນການແກ້ໄຂບັນຫາ ແລະ ຄວາມສາມາດດ້ານການຈັດຕັ້ງ ຂອງອົງການຄຸ້ມຄອງປ່າສະຫງວນແຫ່ງຊາດຫີນໜາມໜໍ່ເອງ. ຜູ້ເຂົ້າຮ່ວມແຕ່ລະທ່ານໄດ້ໃຫ້ຄະແນນ ໄພຂົ່ມຂູ່ທາງກົງ ແຕ່ 1-8 ສາລັບ ເຈັດເງື່ອນໄຂ. ຜົນໄດ້ຮັບຂອງການຈັດລະດັບ ໄພຂົ່ມຂູ່ທາງກົງ ທີ່ມີຕໍ່ຊີວະນາໆພັນ ຢູ່ປ່າສະຫງວນແຫ່ງຊາດຫີນໜາມໜໍ່ ມີດັ່ງລຸ່ມນີ້:

| ໄພຂົ່ມຂູ່ | ຄະແນນລວມ ຂອງ 7 ເງື່ອນໄຂ | ລຳດັບ |
|---|---|---|
| ການຂຸດຄົ້ນໄມ້ເພື່ອການຄ້າ | 7 (787) | 2 |
| ການຂຸດຄົ້ນໄມ້ເພື່ອການຄ້າ | 5.5 (675) | 3.5 |
| ການລ່າສັດເພື່ອການຄ້າ | 8 (865) | 1 |
| ການລ່າສັດເພື່ອການຄ້າ | 5.5 (675) | 3.5 |
| ການຂຸດຄົ້ນເຄື່ອງປ່າຂອງດົງໃນປະລິມານທີ່ຫລາຍເກີນໄປ | 4 (666) | 5 |
| ການຂຸດຄົ້ນເຄື່ອງປ່າຂອງດົງ ຂອງຊຸມຊົນ | 3 (536) | 6 |
| ນ້ຳຖ້ວມ | 2 (290) | 7 |
| ໄຟໃໝ້ | 1 (262) | 8 |

ຜົນໄດ້ຮັບ ສະແດງໃຫ້ເຫັນວ່າ ການລ່າສັດເພື່ອການຄ້າ ແລະ ການຂຸດຄົ້ນໄມ້ເພື່ອການຄ້າ ຖືໄດ້ວ່າເປັນບັນຫາທີ່ສຳຄັນທີ່ສຸດ ສຳລັບ ອົງການຄຸ້ມຄອງປ່າສະຫງວນແຫ່ງຊາດຫີນໜາມໜໍ່ທີ່ຈະໄດ້ແກ້ໄຂ. ໃນນີ້ຍັງມີ ການລ່າສັດ ແລະ ການຂຸດຄົ້ນໄມ້ຂອງປະຊາຊົນນຳ ອີກ. ວຽກກ່ຽວກັບ ເຄື່ອງປ່າຂອງດົງແມ່ນເປັນວຽກຍ່ ູໃນຍຸດທະສາດ ແລະ ວຽກກ່ຽວກັບ ການປ່ຽນແປງດິນຟ້າອາກາດ (ນ້ຳຖ້ວມ ແລະ ໄຟໃໝ້) ໃນໄລຍະນີ້ ຍັງຖືວ່າມີຄວາມສຳຄັນໜ້ອຍ ແລະ ກໍເປັນເລື່ອງທີ່ຫຍຸ້ງຍາກສຳລັບອົງການຄຸ້ມຄອງ ປ່າສະຫງວນແຫ່ງຊາດ ຫີນໜາມໜໍ່ທີ່ຈະດຳເນີນການສິ່ງໃດສິ່ງໜຶ່ງໄດ້.

ຢູ່ໃນການສຶກສາຄົ້ນຄວ້າ ທີ່ດຳເນີນການໃນປີ 2013 ຍັງໄດ້ລາຍງານໃຫ້ຮູ້ວ່າ ປ່າໄມ້ທີ່ຢູ່ໃນ ເຂດປ່າສະຫງວນແຫ່ງຊາດ ແມ່ນໄດ້ຫລຸດລົງພຽງແຕ່ 1.7% ຕະຫລອດໄລຍະ 10 ຜ່ານມາ (ຈາກ 66.1% ໃນປີ 2000 ມາເປັນ 64.4% ໃນປີ 2010). ສະຫລຸບແລ້ວ ຖິ່ນທີ່ຢູ່ອາໄສ ໂດຍສ່ວນໃຫຍ່ ແລະ ສັດປ່າທີ່ກ່ຽວຂ້ອງຢູ່ພາຍໃນ ເຂດປ່າສະຫງວນຫີນໜາມໜໍ່ ແມ່ນຢູ່ໃນສະພາບບໍລິສຸດ.

## ສະພາບເສດຖະກິດ-ສັງຄົມ

### ປະຊາຊົນ ແລະ ບ້ານທີ່ກ່ຽວຂ້ອງ

ມີບ້ານທີ່ຢູ່ອ້ອມຮອບ ຈຳນວນ 19 ບ້ານໂດຍມີການແບ່ງຄວາມຮັບຜິດຊອບຄຸ້ມຄອງ ຢູ່ເຂດປ່າສະຫງວນຫີນໜາມໜໍ່ ຊຶ່ງເປັນພາກສ່ວນໜຶ່ງຂອງ ຫ້າກຸ່ມບ້ານ: ບ້ານດູ່ ແລະ ບ້ານລັງຄາງ (ປະຈຸບັນແມ່ນເມືອງໄລ່ລວມກັນເປັນ ບ້ານທົ່ງຄຳ), ຂະຍຸ, ໜອງປິງ ແລະ ໜອງມ້າ. ລວມທັງໝົດ 7.624 ຄົນ ໃນຈຳນວນ 1.493 ຫລັງຄາເຮືອນ ອາໄສຢູ່ໃນ 19 ບ້ານ ໃນປີ 2011, ຊຶ່ງເພີ່ມຂຶ້ນເປັນ 8.099 ຄົນ ໃນຈຳນວນ 1.570 ຫລັງຄາເຮືອນ ໃນປີ 2014. ບ້ານທີ່ຢູ່ອ້ອມຮອບ 19 ບ້ານ ຕົກເປັນ 25.6% ຂອງປະຊາກອນທັງໝົດ ໃນເມືອງ ບົວລະພາ (31.676 ຄົນ ໃນປີ 2014) (ຂໍ້ມູນ ຈາກແຜນຄຸ້ມຄອງປ່າສະຫງວນແຫ່ງຊາດ ຫີນໜາມໜໍ່ 2015). ມີບ້ານໃດທີ່ຕັ້ງຢູ່ພາຍໃນ ເຂດປ່າສະຫງວນດັ່ງກ່າວນີ້ ຕື່ມອີກ.

| ເມືອງ | ຈຳນວນບ້ານ | ຈຳນວນບ້ານ ຕາມປະເພດ | | | ປະຊາກອນ |
|---|---|---|---|---|---|
| | | I | II | III | |
| ບົວລະພາ | 19 | 0 | 6 | 12 | 8,024 |

**ສະຖິຕິກ່ຽວກັບປະຊາກອນ ແລະ ຊົນເຜົ່າ ຢູ່ໃນ 19 ບ້ານອ້ອມຮອບປ່າສະຫງວນແຫ່ງຊາດຫີນໜາມໜໍ່ ຢູ່ເມືອງບົວລະພາ**

| ລດ | ຊື່ບ້ານ | ຊື່ກຸ່ມບ້ານ | ຊົນເຜົ່າ | ຈຳນວນ ຫລັງຄາ ເຮືອນ | ຈຳນວນຄົນ | ທີ່ຕັ້ງ |
|---|---|---|---|---|---|---|
| 1 | ທົ່ງຊຳ | ທົ່ງຊຳ | ພູໄທ; ມະກ່ອງ | 55 | 338 | ຊໍ້າຊ້ອນ |
| 2 | ວັງມະເນີ | ທົ່ງຊຳ | ພູໄທ; ສະລ່າງ | 66 | 322 | ຊໍ້າຊ້ອນ |
| 3 | ບ້ານ ດຸ | ທົ່ງຊຳ | ພູໄທ | 75 | 396 | ຊໍ້າຊ້ອນ |
| 4 | ໜອງໂນ | ທົ່ງຊຳ | ພູໄທ | 56 | 289 | ຊໍ້າຊ້ອນ |
| 5 | ໜອງແສງ | ທົ່ງຊຳ | ພູໄທ | 55 | 298 | ຊໍ້າຊ້ອນ |
| 6 | ໜອງບົວ | ທົ່ງຊຳ | ມະກ່ອງ; ໂຍຍ | 119 | 660 | ຊໍ້າຊ້ອນ |
| 7 | ຜານົບ | ທົ່ງຊຳ | ມະກ່ອງ; ໂຍຍ | 92 | 430 | ຊໍ້າຊ້ອນ |
| 8 | ວັງຄົນ | ທົ່ງຊຳ | ພູໄທ | 29 | 142 | ຊໍ້າຊ້ອນ |
| 9 | ແສນພັນ | ຂະຍຸ | ພູໄທ | 66 | 331 | ຊໍ້າຊ້ອນ |
| 10 | ຂະຍຸ | ຂະຍຸ | ກະເລີງ | 130 | 670 | ຊໍ້າຊ້ອນ |
| 11 | ສະອາງ | ຂະຍຸ | ກະເລີງ | 107 | 533 | ຊໍ້າຊ້ອນ |
| 12 | ຫຍ່າຫວາຍ | ຂະຍຸ | ກະເລີງ | 56 | 263 | ຊໍ້າຊ້ອນ |
| 13 | ຫຍ່າແວດ | ໜອງປີງ | ມະກ່ອງ; ຕຣີ | 64 | 367 | ຊໍ້າຊ້ອນ |
| 14 | ກວນຂະໂຍມ | ໜອງປີງ | ຫງວນ (ຫວຽດ) | 91 | 421 | ຊໍ້າຊ້ອນ |
| 15 | ໜອງປີງ | ໜອງປີງ | ກະເລີງ; ມະກ່ອງ; ຫງວນ; ຕຣີ | 133 | 669 | ຊໍ້າຊ້ອນ |
| 16 | ທັບລາວ | ໜ້າມ້າ | ມະກ່ອງ; ຕຣີ | 70 | 419 | ຊໍ້າຊ້ອນ |
| 17 | ກະອີ | ໜ້າມ້າ | ມະກ່ອງ | 72 | 399 | ຊໍ້າຊ້ອນ |
| 18 | ລະໂບຍ | ໜ້າມ້າ | ມະກ່ອງ; ຕຣີ | 23 | 149 | ຊໍ້າຊ້ອນ |
| 19 | ໜ້າມ້າ | ໜ້າມ້າ | ມະກ່ອງ; ຕຣີ | 155 | 928 | ຊໍ້າຊ້ອນ |
| **ລວມທັງໝົດ** | | | | **1,514** | **8,024** | |

(ຫ້ອງການຄຸ້ມຄອງຊັບພະຍາກອນປ່າໄມ້ແຂວງ, ແຂວງຄຳມ່ວນ; ສູນສະຖິຕິແຫ່ງຊາດ ສຳລັບການສຳຫລວດພົນລະເມືອງແຫ່ງຊາດ, 2015)

### ອົງປະກອບດ້ານຊົນເຜົ່າ

ຢູ່ເມືອງນີ້ ແມ່ນບໍ່ມີຊົນເຜົ່າລາວແທ້ໆ. ຊົນເຜົ່າທີ່ເວົ້າພາສາ ໄຕ-ກະດາຍ ແມ່ນເຜົ່າກະເລີງ, ໂຍຍ, ຫລື ຜູ່ໄທ (ລວມທັງເຜົ່າກະຕາກ). ພາສາ ກະຕູ ຕົ້ນຕໍແມ່ນ ບຣູ ແລະ ຕຣີ. ຢູ່ດ້ານຕາເວັນຕົກສ່ຽງໃຕ້ ມີສອງຊົນເຜົ່າ, ປຸຍ ແລະ ດຽວ, ຊຶ່ງອາດຈະແມ່ນກຸ່ມພາສາກະຕູ (Katuic) ຫລື ຜູ່ໄທ. ມັນເປັນໄປໄດ້ຫລາຍທີ່ຊົນເຜົ່າ ຣັກ (Ruc), ຊຶ່ງແມ່ນກຸ່ມເຜົ່າເລ້ລ້ອນ(foraging nomads), ກໍອາໄສຢູ່ໃນເຂດປ່າສະຫງວນຫີນ ໜາມໜໍ່ (Chamberlain, pers. comm.; Chamberlain *et al.,* 1996).

### ຄຸນຄ່າດ້ານການທ່ອງທ່ຽວ

ຢູ່ບໍລິເວນປ່າສະຫງວນແຫ່ງຊາດຫີນໜາມໜໍ່, ການທ່ອງທ່ຽວຕົ້ນຕໍທີ່ໃຫ້ບໍລິການ ແມ່ນການທ່ອງທ່ຽວທີ່ຕິດພັນກັບບ້ານ. ກຸ່ມບໍລິການທ່ອງທ່ຽວມີຢູ່ສີ່ບ້ານ: ບ້ານໜອງປີງ, ໜອງບົວ, ໜອງແສງ ແລະ ທົ່ງຊຳ. ຈຳນວນຫລັງຄາເຮືອນມີທັງໝົດ 35 ຫລັງຄາເຮືອນ. ກຸ່ມບໍລິການ ຢູ່ແຕ່ລະບ້ານແມ່ນໄດ້ຜ່ານການຝຶກອົບຮົມ ໃນການໃຫ້ບໍລິການ ແລະ ໄດ້ເຂົ້າຮ່ວມທັດສະນະສຶກສາ ແລກປ່ຽນບົດຮຽນ ທີ່ຖອດຖອນໄດ້ຈາກຖ້ຳກອງລໍ່. ກຸ່ມເຫລົ່ານີ້ ພວມເລີ່ມມີລາຍຮັບຈາກການທ່ອງທ່ຽວ ຊຶ່ງຄາດວ່າຈະສ້າງຄວາມກະຕືລືລົ້ນໃຫ້ເຂົາເຈົ້າ ເຂົ້າຮ່ວມໃນການອະນຸລັກທຳມະຊາດ.

ຢູ່ບ້ານໜອງປິງ, ມີສາມກຸ່ມສະຫະກອນ, ກຸ່ມເຮືອນຳທ່ຽວ, ກຸ່ມເຮືອນພັກ, ແລະ ກຸ່ມເຮືອພັກແຮມ(home-stay), ຜະລິດຕະພັນການທ່ອງທ່ຽວຫລັກ ກໍແມ່ນການທ່ອງທ່ຽວທາງເຮືອ ໄປຢ້ຽມຊົມຖ້ຳເຊບັ້ງໄຟ ໂດຍມີຄົນນຳທ່ຽວທີ່ເປັນຊາວບ້ານ.

ຫີນໜາມໜໍ່ຍັງເປັນພື້ນທີ່ ສຳຄັນທາງປະຫວັດສາດ, ຊຶ່ງເປັນເສັ້ນທາງຫລັກ ຂອງເສັ້ນທາງໂຮຈີ່ມິນ. ຢູ່ບ້ານໜອງບົວ ມີສອງກຸ່ມບໍລິການ, ກຸ່ມຜູ້ນຳທ່ຽວຂັ້ນບ້ານທີ່ພາທ່ຽວຍ່າງປ່າ ແລະ ກຸ່ມຜູ້ເຖົ້າທີ່ນຳທ່ຽວດ້ານປະຫວັດສາດ. ແຫລ່ງທ່ອງທ່ຽວຕົ້ນຕໍຢູ່ບ້ານນີ້ແມ່ນການນຳຮອຍເສັ້ນທາງໂຮຈີ່ມິນ ຊຶ່ງເປັນເສັ້ນທາງມໍລະດົກ; ບາງສ່ວນຂອງເສັ້ນທາງນີ້ ມີສະພາບທີ່ໃກ້ຄຽງກັບສະພາບດັ້ງເດີມ. ການທ່ອງທ່ຽວຕາມເສັ້ນທາງ ໂຮຈີ່ມິນແມ່ນເລີ່ມຈາກບ້ານໜອງບົວ,ຜານົບ,ວັງຄົນ,ແລະແສນພັນ, ຕາມຮອຍທາງອັນມະຫັດສະຈັນທີ່ສ້າງຂຶ້ນດ້ວຍວິສະວະກຳ, ຫືວຄິດປະດິດສ້າງ ແລະ ຄວາມອົດທົນຂອງມະນຸດ. ທ່ານສາມາດທ່ຽວຊົມຖ້ຳ ແລະສົນທະນາກັບປະຊາຊົນ ເພື່ອຮຽນຮູ້ປະຫວັດສາດຂອງ ກົ່ວມູຢາ ແລະຮ່ອມພູແຄບໆທີ່ມີລົດບັນທຸກທັງໝົດ 75% ທີ່ຂົນສົ່ງ ສະບຽງອາຫານ, ອາວຸດຍຸດໂທປະກອນລົງປົດປ່ອຍພາກໃຕ້ຫວຽດນາມ. ໃນປາງສົງຄາມອິນດູຈີນ, ເສັ້ນທາງນີ້ມີແຕ່ຂີ້ຕົມ ຊຶ່ງເປັນເສັ້ນທາງຜ່ານຕາມສາຍນ້ຳ ແລະແຄບໄປຕາມຮ່ອມພູ ຂອງຜາຫີນປູນ, ເປັນເສັ້ນທາງສຳຄັນທີ່ຄັບແຄບ ຢູ່ໃກ້ກັບບ້ານຜານົບ ແລະ ບ້ານວັງຄົນ ແລະ ເປັນບ່ອນທີ່ຖືກຖິ້ມລະເບີດຫລາຍທີ່ສຸດ.

ການທ່ຽວຊົມກົ່ວມູຢາຕາມເສັ້ນທາງເລກ 12 ດ້ວຍລົດໃຊ້ເວລາປະມານ ສອງຊົ່ວໂມງ ເພື່ອຊົມທິວທັດທຳມະຊາດທີ່ສວຍສົດງົດງາມຕາມຮ່ອມພູ. ນອກຈາກນັ້ນ ກໍຍັງມີຖ້ຳສອງແຫ່ງຊຶ່ງເປັນບ່ອນທີ່ປະຊາຊົນເຄີຍໃຊ້ລີ້ໄພໃນປາງສົງຄາມ ທີ່ມີການຖິ້ມລະເບີດ ຄື: ຖ້ຳ ນ້ຳ ແລະ ຖ້ຳໂລງ ໂດຍມີໄລຍະທາງຍ່າງຈາກ ບ້ານໜອງບົວ 30 ນາທີ. ຜູ້ເຖົ້າຜູ້ແກ່ພາຍໃນບ້ານ ຍິນດີທີ່ຈະເລົ່າຊີວິດໃນໄວເດັກຂອງພວກເພິ່ນທີ່ໃຊ້ຊີວິດຢູ່ໃນເຂດນີ້ ໃຫ້ນັກທ່ອງທ່ຽວຟັງ. ແຫລ່ງທ່ອງທ່ຽວທີ່ໜ້າສົນໃຈແຫ່ງທີ່ສອງໄລຍະທາງສອງກິໂລແມັດ ໃຊ້ເວລາຍ່າງທ່ຽວຊົມທຳມະຊາດໜຶ່ງຊົ່ວໂມງເຄິ່ງ ເພື່ອຊົມນ້ຳຕົກຕາດສອງຊູ້, ຊຶ່ງເປັນບ່ອນທີ່ນັກທ່ອງທ່ຽວສາມາດກິນເຂົ້າປ່າຍາມບ່າຍ ແລະມ່ວນຊື່ນໄປກັບການລອຍນ້ຳ ໃນໜອງນ້ຳໃສ ຢູ່ຕີນຜານ້ຳຕົກຕາດສອງຊູ້.ບ່ອນທີສາມ, ນັກທ່ອງທ່ຽວສາມາດທ່ຽວຊົມບ້ານຕ່າງໆທີ່ຢູ່ບໍລິເວນໃກ້ຄຽງ ແລະ ສາມາດທ່ຽວເບິ່ງຂຸມລະເບີດຈຳນວນຫລວງຫລາຍ ຊຶ່ງປະຈຸບັນແມ່ນໃຊ້ເປັນໜອງປາ ຢູ່ບ້ານວັງຄົນ, ຫລື ເບິ່ງປີກເຮືອບິນ ທີ່ຖືກຍິງຕົກຢູ່ບ້ານຜານົບ ແລະ ເຮືອນຂອງປະຊາຊົນທີ່ເຮັດດ້ວຍອາລູມີນຽມທີ່ເປັນສິ້ນສ່ວນຂອງລູກລະເບີດ ຢູ່ບ້ານແສນພັນ.

ບ້ານໜອງແສງມີກຸ່ມບໍລິການທ່ອງທ່ຽວ ຫົກຄອບຄົວ ບໍລິການການພາທ່ຽວຕາມໜ້າຜາ. ສິ່ງທີ່ໜ້າສົນໃຈຂອງບ້ານນີ້ ກໍຄືການຍ່າງທ່ຽວຊົມທຳມະຊາດໄລຍະສັ້ນ ໃຊ້ເວລາປະມານ ສອງຫາສາມຊົ່ວໂມງ ອ້ອມຕາມຜາ ຊຶ່ງເອີ້ນກັນວ່າ ຜາກູດ. ຕອນເຊົ້າ ແລະ ຕອນບ່າຍ ສາມາດທ່ຽວຊົມຝູງລີງກຸ່ມໜຶ່ງ ແລະ ນົກຫລາຍຊະນິດ.

ບ້ານຫຶງຊຳມີກຸ່ມບໍລິການທ່ອງທ່ຽວໜຶ່ງກຸ່ມ ປະກອບດ້ວຍ ຫົກຄອບຄົວ ທີ່ໃຫ້ບໍລິການຍ່າງທ່ຽວຊົມທຳມະຊາດ. ສິ່ງທີ່ໜ້າສົນໃຈຕົ້ນຕໍກໍແມ່ນການຍ່າງທ່ຽວຊົມປ່າ ໄລຍະໜຶ່ງວັນຕາມສາຍນ້ຳຫົກ ແລະທ່ຽວຊົມຖ້ຳສາມແຫ່ງ ຊຶ່ງແມ່ນຖ້ຳນ້ຳລອດຜ່ານ. ນັກທ່ອງທ່ຽວອາດຈະມີໂອກາດດີໄດ້ພົບເຫັນໂຄ່ງ ແລະ ນົກຊະນິດຕ່າງໆ. ມີຖ້ຳໜຶ່ງ ທີ່ມີການກຳເນີດສິ່ງສວຍສົດງົດງາມທາງທຳມະຊາດ, ແລະຖ້ຳອື່ນແມ່ນຍັງມີສິ່ງເສດເຫລືອ ຈາກການຕັ້ງຄ້າຍຂອງ ທະຫານຫວຽດນາມ ໃນປາງສົງຄົມ. ຖ້ຳນີ້ຍັງສາມາດເປັນບ່ອນພັກຜ່ອນກິນເຂົ້າປ່າໄດ້. ພາກສ່ວນຮັບຜິດຊອບ ຢູ່ປ່າສະຫງວນຫີນໜາມໜໍ່ ໄດ້ສ້າງຍຸດທະສາດ ເພື່ອສະໜັບສະໜູນກຸ່ມທ່ອງທ່ຽວເຫລົ່ານີ້ ຊຶ່ງຈະເຮັດໃຫ້ລາຍຮັບທີ່ພວກເຂົາຫາໄດ້ຈາກການທ່ອງທ່ຽວ ກາຍເປັນສິ່ງຊຸກຍູ້ຈິດໃຈການອະນຸລັກທຳມະຊາດ. ນອກຈາກນັ້ນແລ້ວ, ກໍໄດ້ຈັດວາງລະບົບການຂາຍປີ້ເຂົ້າທ່ຽວຊົມປ່າສະຫງວນ ທີ່ຊ່ວຍໃຫ້ມີການແບ່ງປັນຜົນປະໂຫຍດຮ່ວມກັບປະຊາຊົນທ້ອງຖິ່ນ ແລະ ເປັນແຫລ່ງສະໜອງເງິນທຶນທີ່ຍືນຍົງໃຫ້ແກ່ການຄຸ້ມຄອງປ່າສະຫງວນແຫ່ງຊາດ.

## ແຜນຄຸ້ມຄອງ ແລະ ການກຳນົດເຂດ

ແຜນຄຸ້ມຄອງຮ່ວມ ຂອງປ່າສະຫງວນແຫ່ງຊາດຫີນໜາມໜໍ່ ແມ່ນໄດ້ເຮັດຂຶ້ນໃນປີ 2010 ໂດຍການຊ່ວຍເຫລືອຈາກອົງການ IUCN ປະຈຳ ສປປ ລາວ. ແຜນຄຸ້ມຄອງຮ່ວມໄລຍະຫ້າປີ ສະບັບຕິດຕາມຄືນ (2016-2020) ໄດ້ເຮັດຂຶ້ນ ໃນປີ 2015 ໂດຍການ

ຊ່ວຍເຫລືອດ້ານວິຊາການຈາກ ອົງການ GIZ. ໄດ້ມີການການົດເຂດ ສາລັບປ່າສະຫງວນ ເຖີງແມ່ນວ່າ ຍັງບໍ່ທັນໄດ້ດາເນີນການວາງແຜນນໍາໃຊ້ທີ່ດິນເທື່ອ. ບໍ່ມີຂໍ້ກໍານົດໃນການກໍານົດເຂດ ສໍາລັບການພັດທະນາການທ່ອງທ່ຽວ ຢູ່ພາຍໃນປ່າສະຫງວນ.

## ການປະກອບສ່ວນອັນສໍາຄັນ ຕໍ່ລະບົບ ປ່າສະຫງວນ

### ຄຸນຄ່າທາງທໍລະນີວິທະຍາ

ຄວາມສະລັບຊັບຊ້ອນ ແລະ ຄວາມຫລາກຫລາຍທາງດ້ານທໍລະນີ ແລະ ລັກສະນະການກໍາເນີດ ແລະ ການປ່ຽນແປງ ດ້ານທໍລະນີວິທະຍາຂື້ນ ໃນເຂດປ່າສະຫງວນແຫ່ງຊາດຫີນໜາມໜໍ່ ຊຶ່ງກໍ່ໃຫ້ເກີດມີພື້ນທີ່ຜາຫີນປູນກວ້າງໃຫຍ່ທີ່ສວຍສົດງົດງາມ ແລະ ມີຄວາມເປັນເອກະລັກທີ່ໂດດເດັ່ນທາງທໍາມະຊາດ. ປະຫວັດຄວາມເປັນມາທາງດ້ານທໍລະນີກ່ຽວກັບຫີນທີ່ເກີດຂື້ນຕາມໜ້າດິນຢູ່ໃນຍຸກຖ່ານຫີນ ກັບຜາຫີນປູນທີ່ຜ່ານວິວັດທະນາການມາຮອດປະຈຸບັນ. ລັກສະນະທາງພູມີທັດຂອງ ພູຫີນປູນ ຫີນໜາມໜໍ່ ແມ່ນພູພຽງຫີນປູນທີ່ຖືກຕັດແຍກອອກ ມີພື້ນທີ່ເກືອບຕິດຈອດທັງໝົດກັບ ກໍາແພງຫີນປູນ ຫລື ໜ້າຜາສູງເຖີງ 500 ແມັດເໜືອລະດັບນໍ້າທະເລ ສ່ວນພື້ນທີ່ຂ້ອນຂ້າງຮາບພຽງແລະຕໍ່າ◌່ກວ່າ, ຄົນທ້ອງຖິ່ນເອີ້ນວ່າ ກວນ. ພູຫີນປູນຖືກເຊາະເຈື່ອນກາຍເປັນຍອດແຫລມຄ້າຍຄືກັນກັບກຸ່ມຮູບຈວຍ ພ້ອມທັງເປັນຜາຫີນປູນສູງຊັນທີ່ມີຮອຍແຕກລຽນກັນຕາມໜ້າດິນ ແລະມີລັກສະນະໜ້າດິນທີ່ສວຍສົດງົດງາມ ພ້ອມທັງມີຮ່ອງຮອຍນໍ້າເຊາະເຈື່ອນຕາມໜ້າຜາຫີນ ແລະ ຈອມຜາ. ແມ່ນໍ້າເຊບັ້ງໄຟໄຫລລອດຖໍ້າມີລວງຍາວປະມານ 6.4 ກມ ຜ່ານຜາຫີນປູນ ກໍໃຫ້ເກີດມີນໍ້າລອດຖໍ້າ ທີ່ໃຫຍ່ທີ່ສຸດໃນໂລກ, ຊຶ່ງປະດັບປະດັບໄປດ້ວຍຫີນຍ້ອຍຂະຫຍາຍໃຫຍ່ ຈໍານວນຫລາຍ ທີ່ສວຍສົດງົດງາມ.

### ຄຸນຄ່າທາງດ້ານຊີວະນາໆພັນ

ປ່າສະຫງວນແຫ່ງຊາດຫີນໜາມໜໍ່ ໄດ້ຖືກຮັບຮູ້ວ່າເປັນພື້ນທີ່ ທີ່ມີຄວາມສໍາຄັນໃນລະດັບໂລກ ຕໍ່ການອະນຸລັກ ຊີວະນາໆພັນ ຍ້ອນຄວາມຫລາກຫລາຍດ້ານຖິ່ນທີ່ຢູ່ອາໄສ ແລະ ປ່າໄມ້ປະເພດຕ່າງໆ ຕາມໜ້າດິນຂອງພື້ນທີ່ປ່າສະຫງວນ ຊຶ່ງກໍ່ໃຫ້ເກີດມີສັດສາວາສິ່ງ ແລະ ພືດພັນນາໆຊະນິດ ລວມທັງຊະນິດພັນທີ່ໃກ້ຈະສູນພັນໃນລະດັບໂລກ, ຊະນິດພັນສະເພາະຖິ່ນ ແລະ ຊະນິດພັນທີ່ອາໄສຢູ່ຕາມຜາຫີນ. ໂດຍສະເພາະແລ້ວ, ຫີນໜາໜໍ່ ໄດ້ເປັນຖິ່ນທີ່ຢູ່ອາໄສຂອງສັດລ້ຽງລູກດ້ວຍນົມຂະໜາດນ້ອຍຈໍາພວກລີງ (primates), ໃນນັ້ນມີຫ້າປະເພດ ທີ່ໃກ້ຈະສູນພັນໃນລະດັບໂລກ. ຂາແດງ(Red-shanked Douc Langur *Pygathrix nemaeus*) ແລະ ທະນີແກ້ມຂາວ (Southern White-cheeked Gibbon *Nomascus siki*) ທີ່ເປັນຈຸດເດັ່ນ ຂອງ ປ່າສະຫງວນແຫ່ງຊາດຫີນໜາມໜໍ່, ແລະຍັງມີ ຄ່າງຮາຕິງ(Black Langur *Trachypithecus hatinhensis ebenus*) ຊຶ່ງລ້ວນແຕ່ໃກ້ຈະສູນພັນ. ຫີນໜາມໜໍ່ ເປັນບ່ອນລີ້ໄພຂອງ ຊ່າງທີ່ມີຂະໜາດໃຫຍ່ ຫລື ເປັນແຫ່ງດຽວທີ່ມີປະຊາກອນຂອງຊ່າງ ທີ່ໃກ້ຈະສູນພັນທັງສອງຊະນິດ ໃນໂລກ. ສ່ວນຊະນິດພັນອື່ນໆ ແມ່ນມີນົກກົກສີ່ຊະນິດ (hornbills (Bucerotidae), ໜຶ່ງໃນນັ້ນແມ່ນນົກກົກຄໍແດງ (Rufous-necked Hornbill *Aceros nipalensis*)ທີ່ເປັນຊະນິດພັນໃກ້ຈະສູນພັນໃນລະດັບໂລກ.

ນອກຈາກຄວາມໜາແໜ້ນຂອງຊະນິດພັນ ແລະ ຊະນິດພັນສະເພາະຖິ່ນທີ່ອາໄສຢ່◌ູໃນຜາຫີນປູນແລ້ວ ຍັງມີຊະນິດພັນສັດ ແລະ ພືດຊະນິດຕ່າງໆ ທີ່ອາໄສຢູ່ຕາມພູຫີນປູນ ຊຶ່ງຍັງບໍ່ທັນຮູ້ກັນຫລາຍຢູ່ໃນເຂດອາຊີຕາເວັນ ອອກສ່ຽງໃຕ້, ແຕ່ຄວາມຈິງແລ້ວ ຊະນິດພັນດັ່ງກ່າວແມ່ນມີຢູ່ໃນເຂດປ່າສະຫງວນແຫ່ງຊາດຫີນໜາມໜໍ່. ຈໍານວນຊະນິດພັນທີ່ໄດ້ນໍາສະເໜີມາຂ້າງເທິງນັ້ນ ອາດຈະສະທ້ອນໃຫ້ເຫັນວ່າການສໍາຫລວດຊະນິດພັນສັດປ່າ ແລະ ພືດປ່ານາໆຊະນິດ ຢູ່ເຂດປ່າສະຫງວນຫີນໜາມໜໍ່ຍັງມີຄວາມຈໍາກັດ ແທນທີ່ຈະໃຫ້ກວມເອົາຊີວະນາໆພັນທີ່ມີຢູ່ຂອງເຂດດັ່ງກ່າວ.
ຄວາມອຸດົມສົມບູນທາງດ້ານທໍາມະຊາດໃນຜາຫີນປູນ, ຖິ່ນທີ່ຢູ່ອາໄສຂະໜາດໃຫຍ່, ຂະໜາດນ້ອຍ ແລະ ທີ່ຕັ້ງຂອງພູມສັນຖານ. ພືດພັນຢູ່ຕາມໜ້າດິນ, ລະດັບຄວາມໜາແໜ້ນຂອງປະຊາກອນສັດ ແລະ ພືດພັນ ອາດຈະສາມາດຄົ້ນພົບ ຊະນິດພັນໃໝ່ໆ ເພີ່ມເຕີມລົງໃນບັນຊີຊະນິດພັນໃໝ່ ຂອງໂລກ ແລະ ຊະນິດພັນ ທີ່ເປັນສິ່ງໃໝ່ ຕໍ່ວິທະຍາສາດ.

ຄຸນຄ່າດ້ານຊີວະນາໆພັນ ຢູ່ເຂດຫີນໜາມໜໍ່ ແມ່ນມີຄຸນຄ່າສູງຫລາຍ ຍ້ອນຈຸດທີ່ຕັ້ງຂອງມັນຢູ່ບ່ອນຫ່າງໄກສອກຫລີກ ແລະຢູ່ພື້ນທີ່ຄ້ອຍຊັນ. ຊະນິດພັນທີ່ສໍາຄັນຈໍານວນຫລວງຫລາຍ (ຊະນິດພັນທີ່ມີຄຸນຄ່າສູງຕໍ່ການອະນຸລັກ) ແມ່ນຖືກພົບເຫັນ ຢູ່ເຂດຫີນໜາມໜໍ່. ຊະນິດພັນດັ່ງກ່າວ ລວມມີ ສັດລ້ຽງລູກດ້ວຍນົມ 10 ຊະນິດ, ນົກ 13 ຊະນິດ ແລະ ເຕົ່າ 6 ຊະນິດ.

**ຄຸນຄ່າດ້ານວັດທະນະທໍາ**

ເມືອງບົວລະພາ ເປັນບ່ອນຕັ້ງຖິ່ນຖານ ຂອງຫລາຍຊົນເຜົ່າທີ່ແຕກຕ່າງກັນ. ແຕ່ລະຊົນເຜົ່າແມ່ນມີວັດທະນະທໍາ ແລະ ເອກະລັກເປັນຂອງຕົນເອງ ແລະ ຄວນຈະມີການສຶກສາຄົ້ນຄວ້າຕື່ມ. ໂດຍສະເພາະ ສິ່ງທີ່ໜ້າສົນໃຈແມ່ນ ປະຊາຊົນເຜົ່າເຈີດ(Cheut) ຢູ່ທາງດ້ານເໜືອຂອງເຂດປ່າສະຫງວນ ທີ່ນໍາໃຊ້ ໜ້າແກ໊ກ(Chamberlain, pers. comm.)

**ບ່ອນຕິດຕໍ່ພົວພັນ**

ທ່ານ ສີສົມພອນ ສຸດທິຈັກ
ຫົວໜ້າ, ຫ້ອງການຄຸ້ມຄອງຊັບພະຍາກອນປ່າໄມ້, ແຂວງຄໍາມ່ວນ
ໂທ/ແຟກ: 051 213 344; ມືຖື: (020) 5522 3815;
E-mail: sisomphone_67@yahoo.com

ທ່ານ ຟອງສະມຸດ ອິນທະນາມ,
ຮອງຫົວໜ້າ ໜ່ວຍງານປ່າສະຫງວນ
Email : mouth_oo@hotmail.com; ມືຖື: 020 2344 1558;

## ປຶດລາຍງານ ແລະ ເອກະສານອ້າງອີງ

ບໍ່ລະບຸຊື່ ຜູ້ຂຽນ 1996. ໂຄງການ ພັດທະນາເສດຖະກິດຊຸມຊົນ: 1996-2005. ເຂດຊຸມແສ-ໜອງມ້າ, ເມືອງບົວລະພາ, ແຂວງຄໍາມ່ວນ (ມິຖຸນາ 1996) [ລາວ].
Berkmuller K. (2013). ການກໍານົດເຂດ ແລະ ການຕິດຕາມກວດກາຊີວະນາໆພັນ ຢູ່ເຂດປ່າສະຫງວນແຫ່ງຊາດ ຫີນໜາມໜໍ່, GIZ ໂຄງການຄຸ້ມຄອງຊັບພະຍາກອນ ແລະ ອະນຸລັກທາມະຊາດແບບຍືນຍົງ ຢູ່ເຂດຫີນໜາມໜໍ່, ທ່າແຂກ.
Chamberlain, J. R. 1999. *ຕົ້ນກໍາເນີດຂອງ ເຊກ(Sek): ຜົນສະທ້ອນ ຕໍ່ປະຫວັດຄວາມເປັນມາຂອງ ເຜົ່າໄຕ ແລະ ຄົນຫວຽດນາມ. ປຶດຂຽນຂອງ ສັງຄົມສະຫຍາມ, ສະບັບທີ 86, ພາກທີ 1 ແລະ 2 (*Journal of the Siam Society. Vol. 86, Parts 1 & 2. *)*
Chamberlain, J. R., Alton, C., Silavong L. and Pilavong, B. 1996. *ການສໍາຫລວດເສດຖະກິດ-ສັງຄົມ ແລະ ວັດທະນະທໍາ, ເຂດໂຄງການນໍ້າເທີນ 2, ສປປ ລາວ. ອົງການແຄ ສາກົນ, ປະເທດລາວ.*
Claridge, G. 1997. ແຂວງຄໍາມ່ວນ: ການສໍາຫລວດຫລວດສິ່ງແວດລ້ອມເບື້ອງຕົ້ນ, ອົງການ IUCN, ນະຄອນຫລວງວຽງຈັນ, ສປປ ລາວ.
de Koning, M., Parr, J.W.K., Sengchanthavong S. and Souvanhpheng Phommasane. 2016. ການຄຸ້ມຄອງທີ່ມີການປະສານສົມທົບກັນ ຊ່ວຍປັບປຸງ ປະສິດທິພາບ ຂອງ ປ່າສະຫງວນແຫ່ງຊາດ ຫີນໜາມໜໍ່ ຢູ່ພາກກາງ ຂອງ ສປປ ລາວ. PARKS 22. Vol: 2. Pp.27-40.
ກົມຄຸ້ມຄອງຊັບພະຍາກອນປ່າໄມ້. 2015. ແຜນການຄຸ້ມຄອງຮ່ວມ ຂອງປ່າສະຫງວນແຫ່ງຊາດຫີນໜາມໜໍ່ (2016-2020). ກະຊວງຊັບພະຍາກອນທໍາມະຊາດແລະສິ່ງແວດລ້ອມ, ສປປ ລາວ.
ກົມປ່າໄມ້. 2010. ແຜນການຄຸ້ມຄອງຮ່ວມ ຂອງປ່າສະຫງວນແຫ່ງຊາດຫີນໜາມໜໍ່ ເຮັດຂຶ້ນໂດຍ ປ່າສະຫງວນແຫ່ງຊາດຫີນໜາມໜໍ່ ໂດຍສົມທົບກັບ ກົມປ່າໄມ້, ພະແນກອະນຸລັກຊັບພະຍາກອນປ່າໄມ້ ໂດຍການຊ່ວຍເຫລືອດ້ານວິຊາການຈາກ ອົງການ IUCN ສປປ ລາວ, ມີນາ 2010.
Dillon, T.C. and Wikramanayake, E.D. 1997. ເວທີສໍາລັບການອະນຸລັກຂ້າມຊາຍແດນ ຢູ່ ກໍາປູເຈຍ, ລາວ ແລະ ຫວຽດນາມ. ອົງການ WWF ອິນດູຈີນ, ແຜນງານ ວິທະຍາສາດການອະນຸລັກ ອົງການ WWF-US.
IUCN. 1995. ໃບລາຍງານຂໍ້ມູນຫຍໍ້ຂອງປ່າສະຫງວນ. ເອກະສານຊ້ອນທ້າຍ 3 ຮອດກາງປີ 1995. ປຶດລາຍງານກ່ຽວກັບສະຖານະພາບຂອງການຄຸ້ມຄອງ ແລະ ການວາງແຜນ ລະບົບປ່າສະຫງວນ ຢູ່ ສປປ ລາວ. ແຜນງານຮ່ວມມືວຽກງານປ່າມີ ລາວ-ສະວິເດັນ.

Le Xuan Canh, et al. 1997. ປຶດລາຍງານການສາຫລວດພາກສະໜາມ ກ່ຽວກັບ ຊີວະນາໆພັນ ຢູ່ປ່າ ຟອງຍາ-ແກບາງ, ແຂວງ ກວາງບິງ, ພາກກາງຫຽວດນາມ, ແຜນງານອົງການ WWF ອິນດູຈີນ.

Fact Sheet: Hin Nam No National Protected Area

Lutz P-D. 2011. ບົດລາຍງານ ການສຳຫລວດ ກ່ຽວກັບ ການສ້າງລາຍຮັບຢູ່ຊົນນະບົດ: ການປະເມີນແບບກະທັດຮັດ ກ່ຽວກັບໂອກາດການສ້າງລາຍຮັບ ຢູ່ບັນດາຊຸມຊົນ ອ້ອມຂ້າງ ປ່າສະຫງວນຫີນໜາມໜໍ່. GIZ ໂຄງການຄຸ້ມຄອງຊັບພະຍາກອນ ແລະ ອະນຸລັກທຳມະຊາດແບບຍືນຍົງ ຢູ່ເຂດຫີນໜາມໜໍ່, ທ່າແຂກ.

Kottelat, M. 1998. ປາຢູ່ອ່າງເກັບນ້ຳ ນ້ຳເທີນ ແລະ ເຊບັ້ງໄຟ, ສປປ ລາວ, ໂດຍມີການຄົ້ນຄວ້າກ່ຽວກັບ ຊາວສອງຊະນິດພັນໃໝ່ (Teleostei: Cyprinidae, Balitoridae, Cobitidae, Coiidae, and Odontubutidae). Icthyol. Explor. Freshwaters. Vol. 9: No. 1. pp 1-128, July 1998.

Timmins, R.J. and Khounboline, K. 1996. *ການສຳຫລວດເບື້ອງຕົ້ນກ່ຽວກັບສັດປ່າ ແລະ ຖິ່ນທີ່ຢູ່ອາໄສ ຢູ່ເຂດປ່າສະຫງວນແຫ່ງຊາດຫີນໜາມໜໍ່, ແຂວງຄຳມ່ວນ, ສປປ ລາວ. ບົດລາຍງານສະບັບສົມບູນ ຍື່ນຕໍ່* CPAWM, ກົມປ່າໄມ້, ກະຊວງກະສິກາແລະປ່າໄມ້, ສປປ ລາວ. ນະຄອນຫລວງວຽງຈັນ. ອົງການ WCS.

Vermeulen, J., and Whitten, T. 1999. ທິດທາງການພັດທະນາຊີວະນາໆພັນ ແລະ ຊັບສິນທາງວັດທະນະທຳ ໃນການຄຸ້ມຄອງຊັບພະຍາກອນພູຫີນປູນ: ບົດຮຽນຈາກ ອາຊີຕາເວັນອອກ. ທະນາຄາໂລກ, Washington, D.C.

Vinton, M. and Walston, J. (editors). 1999. ການສຳຫລວດສັດປ່າ ແລະ ຖິ່ນທີ່ຢູ່ອາໄສ ຂອງປ່າສະຫງວນແຫ່ງຊາດຫີນໜາມໜໍ່ ແລະ ພື້ນທີ່ຕິດແປະ, ແຂວງຄຳມ່ວນ, ສປປ ລາວ, ກຸມພາ - ມີນາ 1998. ຫ້ອງການໂຄງການ ຂອງອົງການ WWF, ສປປ ລາວ.

WWF ອິນດູຈີນ. 1998. *LINC: ການເຊື່ອມໂຍງຫີນໜາມໜໍ່ກັບ ຟອງຍາ ຜ່ານການອະນຸລັກແບບຄູ່ຂະໜານ. ເອກະສານໂຄງການໄລຍະ 1, ອົງການ* WWF,ແຜນງານອິນດູຈີນ, ຮ່າໂນຍ, ຫວຽດນາມ.